ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

EY

Building a better working world

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ເອກະສານລາຍງານການເງິນການປີທີ່ຖືກແປງຄ່າເປັນເງິນກີບ

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະບໍລິຫານ	4
ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີ	5 - 6
ໃບລາຍງານຜົນການດຳເນີນງານກາງປີທີ່ຖືກແປງຄ່າເປັນເງິນກີບ	7
ໃບລາຍງານຖານະການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ	8 - 9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີທີ່ຖືກແປງຄ່າເປັນເງິນກີບ	10
ໃບລາຍງານກະແສເງິນສົດກາງປີທີ່ຖືກແປງຄ່າເປັນເງິນກີບ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ	13 - 41

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("ບໍລິສັດ") ເປັນບໍລິສັດມະຫາຊົນ ທີ່ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ (ຕລຊລ) ສ້າງຕັ້ງ ແລະ ດຳເນີນທຸລະກິດໃນ ສປປ ລາວ. ບໍລິສັດດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດ ສະບັບລ່າສຸດເລກທີ 3271/ຈຫວ, ລົງວັນທີ 29 ສິງຫາ 2024. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນເຊັ່ນ: ກະໄລ, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ. ເຟີນິເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງ ແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ.

ໂຄງສ້າງການຖືຮຸ້ນຂອງບໍລິສັດນະວັນທີ 30 ມິຖຸນາ 2025 ມີລາຍລະອຽດດັ່ງນີ້:

ຂາຮຸ້ນ	*ຈຳນວນຮຸ້ນ (ມູນຄ່າຮຸ້ນ: 2,000 ກີບ/ຮຸ້ນ)*	*ອັດຕາສ່ວນຮ້ອຍຂອງຮຸ້ນ*
ທ່ານ ວັດດານາ ສຸຄະບັນດິດ (*)	28,524,440	17.29%
ທ່ານ ພັນໂນລາ ສຸຄະບັນດິດ (*)	26,844,580	16.27%
ທ່ານ ກິດສະດາ ສຸຄະບັນດິດ (*)	26,844,580	16.27%
ທ່ານນາງ ປະພັດສອນ ສຸຄະບັນດິດ (*)	840,000	0.51%
ທ່ານນາງ ວຽງດາລາ ບຸບຜາ (*)	840,000	0.51%
ທ່ານ ອານຸສອນ ອຸ່ນໄຕ (*)	28,000	0.02%
ທ່ານ ບຸນທະວີ ສີມມາໄຊ (*)	22,400	0.01%
ທ່ານ ສຸວັນນີ ສີສົມໃຈ (*)	28,000	0.02%
ທ່ານ ໄຊສົງຄົມ ຊຸ່ມມະນີວົງ(*)	28,000	0.02%
Global House International Limited	56,000,000	33.94%
ຂາຮຸ້ນທີ່ເປັນບໍລິສັດມະຫາຊົນ ແລະ ບຸກຄົນອື່ນໆ	25,000,000	15.15%
	165,000,000	

(*) ຂາຮຸ້ນເຫຼົ່ານີ້ເປັນຕົວແທນໃຫ້ແກ່ ຄອບຄົວສຸຄະບັນດິດ ທີ່ມີອັດຕາສ່ວນການຖືຮຸ້ນທັງໝົດ 50.92%.

ທຶນຈົດທະບຽນເບື້ອງຕົ້ນຂອງບໍລິສັດແມ່ນ 330,000,000,000 ກີບ. ທຶນຊຳລະຕົວຈິງຂອງບໍລິສັດມາຮອດວັນທີ 30 ມິຖຸນາ 2025 ແມ່ນ 330,000,000,000 ກີບ (31 ທັນວາ 2024: 330,000,000,000 ກີບ).

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ບ້ານເລກທີ 366 ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດມີ 8 ສາຂາໃນ ສປປ ລາວ ໃນນັ້ນ 3 ສາຂາຕັ້ງຢູ່ທີ່ ນະຄອນຫຼວງວຽງຈັນ ແລະ 5 ສາຂາຕັ້ງຢູ່ທີ່ແຂວງອື່ນໆ ດັ່ງລາຍລະອຽດລຸ່ມນີ້:

- ສາຂາ ໂພນຕ້ອງສະຫວາດ ສະຖານທີ່ຕັ້ງຢູ່ບ້ານເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ;
- ສາຂາ ສີໄຄ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ໂຊກໃຫຍ່ ສະຖານທີ່ຕັ້ງຢູ່ຖະໜົນ 450 ປີ, ບ້ານ ໂຊກໃຫຍ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ປາກຊັນ ສະຖານຕັ້ງຢູ່ຖະໜົນ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ;
- ສາຂາ ທ່າແຂກ ສະຖານທີ່ຕັ້ງຢູ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ;
- ສາຂາ ສະຫວັນນະເຂດ ສະຖານທີ່ຕັ້ງຢູ່ ຖະໜົນເລກ 9, ບ້ານ ໂພນສະຫວ່າງເໜືອ, ເມືອງ ໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ;
- ສາຂາ ປາກເຊ ສະຖານທີ່ຕັ້ງຢູ່ ບ້ານ ກາງ, ເມືອງ ນະຄອນປາກເຊ, ແຂວງ ຈຳປາສັກ.

ບໍລິສັດ (ຕໍ່)

- ສາຂາ ຫຼວງພະບາງ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ພອນໄຊ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ

ບໍລິສັດຍັງປະກອບມີ 3 ສາຂາ ທີ່ພວມກໍ່ສ້າງດັ່ງນີ້:

- ສາຂາ ສີມສະໜຸກ ສະຖານທີ່ຕັ້ງຢູ່ ຖະໜົນຫຼັກ 5, ບ້ານ ສີມສະໜຸກ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ;
- ສາຂາ ອຸດົມໄຊ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ນາສາວ, ເມືອງ ໄຊ, ແຂວງ ອຸດົມໄຊ;
- ສາຂາ ວັງວຽງ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ຂັນໝາກ, ເມືອງ ວັງວຽງ, ແຂວງ ວຽງຈັນ.

ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການຂອງບໍລິສັດພາຍໃນໄລຍະ ແລະ ນະມື້ອອກບົດລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ສີມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ຣສ. ປອ ໄຊພອນ ກອງມະນີລາ	ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ສອນສະຫວັນ ແສງອະໄພ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ກິດສະດາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ບຸນທະວີ ສີມມາໄຊ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ນາງ ຊຸຕິການ ສີແສງຈັນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ
ທ່ານ ພິພິບ ວາດສະໜາອາຊາສະກຸນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງນະວັນທີ 17 ກຸມພາ 2025 ສຳລັບໄລຍະເວລາ 2 ປີ

ຂໍ້ມູນທົ່ວໄປ (ຕໍ່)

ຄະນະບໍລິຫານ

ສະມາຊິກຄະນະບໍລິຫານຂອງບໍລິສັດພາຍໃນໄລຍະ ແລະ ນະມື້ອອກປົດລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ ວັດດານາ ສຸຄະບັນດິດ	ຜູ້ອຳນວຍການໃຫຍ່
ທ່ານ ພັນໂນລາ ສຸຄະບັນດິດ	ຜູ້ອຳນວຍການຝ່າຍການເງິນ
ທ່ານ ກິດສະດາ ສຸຄະບັນດິດ	ຜູ້ອຳນວຍການຝ່າຍປະຕິບັດການ

ຜູ້ຕາງໜ້າທາງດ້ານກົດໝາຍ

ຜູ້ຕາງໜ້າທາງດ້ານກົດໝາຍຂອງບໍລິສັດພາຍໃນໄລຍະ ແລະ ນະມື້ອອກປົດລາຍງານສະບັບນີ້ແມ່ນ ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນ ແອນ ຢັ້ງ ລາວ ຈຳກັດ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີໃນການນຳສະເໜີເອກະສານລາຍງານການເງິນ ການປີຂອງບໍລິສັດ ແລະ ເອກະສານລາຍງານການເງິນການປີສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນການປີ

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນການປີ ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນການປີ. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນການປີ, ຜົນການດຳເນີນງານການປີ ແລະ ກະແສເງິນສົດການປີຂອງບໍລິສັດທີ່ສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານການເງິນການປີ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົານັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່ານັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ຫາກມີການເປີດເຜີຍຂໍ້ມູນທີ່ສຳຄັນ ແລະ ໄດ້ອະທິບາຍໃນເອກະສານລາຍງານການເງິນການປີ; ແລະ
- ກະກຽມເອກະສານລາຍງານການເງິນການປີ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດ ຫາກຄາດຄະເນວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງບໍລິສັດຢ່າງ ເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ດ້ວຍເຫດນັ້ນຈຶ່ງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນການປີທີ່ກ່ຽວຂ້ອງ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນການປີແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນການປີ.

ຕາງໜ້າຄະນະບໍລິຫານ:

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 13642391/69288435 - LR

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດ ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ ນະວັນທີ 30 ມິຖຸນາ 2025, ໃບລາຍງານຜົນການດຳເນີນງານກາງປີທີ່ຖືກແປງຄ່າເປັນເງິນກີບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີທີ່ຖືກແປງຄ່າເປັນເງິນກີບ ແລະ ໃບລາຍງານກະແສເງິນສົດກາງປີທີ່ຖືກແປງຄ່າເປັນເງິນກີບ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດັ່ງກ່າວ ແລະ ເອກະສານຊ້ອນທ້າຍເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ ທີ່ປະກອບດ້ວຍບົດສະຫຼຸບຂອງນັນດານະໂຍບາຍການບັນຊີທີ່ສຳຄັນ (ໂດຍລວມແລ້ວເອີ້ນວ່າ "ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ").

ຄວາມຮັບຜິດຊອບຂອງຄະນະບໍລິຫານ

ຄະນະບໍລິຫານຂອງບໍລິສັດ ມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ ໂດຍສອດຄ່ອງກັບນະໂຍບາຍການບັນຊີຕ່ຳທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ແລະ ບັນດາລະບຽບການອື່ນໆທີ່ກ່ຽວຂ້ອງໃນການກະກຽມ ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ຄວາມຮັບຜິດຊອບຂອງນັກກວດສອບ

ພວກຂ້າພະເຈົ້າມີຄວາມຮັບຜິດຊອບໃນການສະແດງຂໍ້ສະຫຼຸບຕໍ່ກັບເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບໂດຍອີງໃສ່ການທົບທວນຄືນຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນໂດຍສອດຄ່ອງກັບ ມາດຕະຖານສາກົນກ່ຽວກັບການທົບທວນຄືນ 2410, "ການທົບທວນຄືນຂໍ້ມູນດ້ານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະຂອງນິຕິບຸກຄົນ".

ການທົບທວນຄືນເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບປະກອບດ້ວຍ ການສອບຖາມຂໍ້ມູນ, ໂດຍສະເພາະຜູ້ຮັບຜິດຊອບດ້ານການເງິນ ແລະ ການບັນຊີ, ໂດຍການນຳໃຊ້ຂັ້ນຕອນການວິເຄາະ ແລະ ທົບທວນອື່ນໆ. ການທົບທວນຄືນແມ່ນມີຂອບເຂດກະທັດຮັດກວ່າການກວດສອບທີ່ປະຕິບັດຕາມມາດຕະຖານສາກົນດ້ານການກວດສອບ ແລະ ດັ່ງນັ້ນຈຶ່ງບໍ່ສາມາດເຮັດໃຫ້ພວກຂ້າພະເຈົ້າເກັບກຳຂໍ້ມູນພຽງພໍທີ່ຈະຮັບປະກັນເຖິງບັນຫາສຳຄັນຕ່າງໆ ເຊິ່ງສາມາດພົບເຫັນໄດ້ໃນເວລາກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ຂໍອອກຄຳເຫັນໃນຮູບແບບໃດໆຕໍ່ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ.

ຂໍ້ສະຫຼຸບ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າເຫັນວ່າ ບໍ່ມີສິ່ງໃດທີ່ເຮັດໃຫ້ພວກຂ້າພະເຈົ້າເຊື່ອວ່າ ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດ ບໍ່ໄດ້ຖືກກະກຽມຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ.

A member firm of Ernst & Young Global Limited

Building a better working world

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ກັບບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນການປີທີ່ຖືກແປງຄ່າເປັນເງິນກີບ, ເຊິ່ງໄດ້ອະທິບາຍກ່ຽວກັບພື້ນຖານການບັນຊີ. ເອກະສານລາຍງານການເງິນການປີທີ່ຖືກແປງຄ່າເປັນເງິນກີບ ແມ່ນໄດ້ກະກຽມເພື່ອຊ່ວຍຄະນະບໍລິຫານຂອງບໍລິສັດໃນການຕອບສະໜອງຄວາມຕ້ອງການລາຍງານຂອງຜູ້ຖືຮຸ້ນຂອງບໍລິສັດ ແລະ ຜູ້ຄຸ້ມຄອງຕະຫຼາດຫຼັກຊັບ. ດັ່ງນັ້ນ, ເອກະສານລາຍງານການເງິນການປີທີ່ຖືກແປງຄ່າເປັນເງິນກີບອາດຈະບໍ່ເໝາະສົມກັບຈຸດປະສົງອື່ນ. ບົດລາຍງານຂອງພວກຂ້າພະເຈົ້າມີຈຸດປະສົງພຽງແຕ່ສຳລັບຂໍ້ມູນ ແລະ ການນຳໃຊ້ຂອງຄະນະບໍລິຫານຂອງບໍລິສັດ ແລະ ຜູ້ຖືຮຸ້ນຂອງບໍລິສັດ ແລະ ຜູ້ຄຸ້ມຄອງຕະຫຼາດຫຼັກຊັບ, ແລະ ບໍ່ຄວນແຈກຢາຍໃຫ້ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ກັບບົດອະທິບາຍເລກທີ 3.1 ຂອງເອກະສານລາຍງານການເງິນການປີທີ່ຖືກແປງຄ່າເປັນເງິນກີບ. ເອກະສານລາຍງານການເງິນການປີທີ່ຖືກແປງຄ່າເປັນເງິນກີບ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025 ແມ່ນຖືກກະກຽມໂດຍອີງຕາມເອກະສານລາຍງານການເງິນການປີສະກຸນເງິນບາດ ສຳລັບໄລຍະການລາຍງານດຽວກັນ ໂດຍສອດຄ່ອງກັບບົດອະທິບາຍຊ້ອນທ້າຍເລກທີ 3 ຂອງເອກະສານລາຍງານການເງິນການປີສະກຸນເງິນບາດ.

ຜົນການທົບທວນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ມີການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ການ ບໍລິສັດ ເອີນແອນຍັງລາວ ຈຳກັດ Ernst & Young Lao Co.,Ltd

ທ່ານ ວັນ ເລ
ຮຸ້ນສ່ວນ
ໃບອະນຸຍາດເນີນການກວດສອບເລກທີ 018/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025

A member firm of Ernst & Young Global Limited

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານຜົນການດຳເນີນງານການປີທີ່ຖືກແປງຄ່າເປັນເງິນກີບ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025

	ບົດອະທິບາຍ ເລກທີ	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ
ລາຍຮັບຈາກການຂາຍ	4	471,338,309,772	456,879,857,343
ຕົ້ນທຶນສິນຄ້າທີ່ຂາຍ	5	(353,434,360,004)	(343,555,701,773)
ກຳໄລຂັ້ນຕົ້ນ		**117,903,949,768**	**113,324,155,570**
ລາຍຮັບອື່ນໆ	6	2,890,616,094	1,849,425,618
ລາຍຈ່າຍໃນການຂາຍ	7	(56,377,538,097)	(49,159,192,641)
ລາຍຈ່າຍບໍລິຫານ	8	(26,427,669,894)	(21,831,970,037)
ຕົ້ນທຶນທາງການເງິນ	9	(4,729,554,194)	(4,450,420,174)
ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນ	10	2,588,203,945	(2,304,686,924)
		(82,055,942,146)	**(75,896,844,158)**
ກຳໄລ ກ່ອນຈ່າຍອາກອນກຳໄລ		**35,848,007,622**	**37,427,311,412**
ອາກອນກຳໄລ	24	(6,308,192,579)	(6,012,200,450)
ກຳໄລສຸດທິພາຍໃນໄລຍະ		**29,539,815,043**	**31,415,110,962**
ກຳໄລຂັ້ນພື້ນຖານຕໍ່ຮຸ້ນ	25	**179**	**190**

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານຖານະການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ
ນະວັນທີ 30 ມິຖຸນາ 2025

	ບົດອະທິບາຍ ເລກທີ	30 ມິຖຸນາ 2025 ກີບ	31 ທັນວາ 2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ທຽບເທົ່າເງິນສົດ	11	37,484,647,325	18,620,031,453
ເງິນຝາກມີກຳນົດໄລຍະສັ້ນ	12	31,917,572,100	31,899,172,500
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	13	10,422,272,215	9,506,989,027
ເຄື່ອງໃນສາງ	14	501,239,134,362	492,761,257,919
ຊັບສິນໝຸນວຽນອື່ນໆ	15	39,505,639,954	37,382,604,013
ລວມຊັບສິນໝຸນວຽນ		**620,569,265,956**	**590,170,054,912**
ຊັບສິນບໍ່ໝຸນວຽນ			
ຊັບສິນພວມຊື້ ແລະ ພວມກໍ່ສ້າງ	16.1	106,268,015,641	86,445,154,337
ຊັບສິນບັດຄົງທີ່ມີຕົວຕົນ	16.2	440,963,743,026	426,732,466,152
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	16.3	734,743,951,885	698,577,813,801
ຊັບສິນບໍ່ໝຸນວຽນອື່ນໆ	17	-	14,202,483,420
ລວມຊັບສິນບໍ່ໝຸນວຽນ		**1,281,975,710,552**	**1,225,957,917,710**
ລວມຊັບສິນ		**1,902,544,976,508**	**1,816,127,972,622**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານຖານະການເງິນການປີທີ່ຖືກແປງຄ່າເປັນເງິນກີບ (ຕໍ່)
ນະວັນທີ 30 ມິຖຸນາ 2025

	ບົດອະທິບາຍ ເລກທີ	*30 ມິຖຸນາ 2025 ກີບ*	*31 ທັນວາ 2024 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	18	69,539,859,078	58,576,579,443
ເງິນກູ້ຢືມໄລຍະສັ້ນ	19	48,702,618,595	67,390,661,817
ເງິນກູ້ຢືມໄລຍະຍາວ - ສ່ວນໝຸນວຽນ	19	30,419,055,837	24,031,020,120
ໜີ້ຕ້ອງສົ່ງອາກອນກຳໄລ	24	6,329,156,024	11,293,089,759
ເງິນມັດຈຳຈາກລູກຄ້າ	21	3,821,730,207	4,342,244,971
ໜີ້ສິນໝຸນວຽນອື່ນໆ	22	17,435,567,875	19,728,450,938
ລວມໜີ້ສິນໝຸນວຽນ		**176,247,987,616**	**185,362,047,048**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ - ສ່ວນບໍ່ໝຸນວຽນ	19	43,721,357,913	35,347,370,505
ຮຸ້ນກູ້	20	65,422,096,200	66,233,252,250
ລວມໜີ້ສິນບໍ່ໝຸນວຽນ		**109,143,454,113**	**101,580,622,755**
ລວມໜີ້ສິນ		**285,391,441,729**	**286,942,669,803**
ທຶນ			
ທຶນຈົດທະບຽນ	23	330,000,000,000	330,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	23	24,735,724,722	24,735,724,722
ການຈັດສັນ - ຄັງສຳຮອງຕາມລະບຽບການ		26,027,348,763	26,027,348,763
ການຈັດສັນ - ຄັງສຳຮອງອື່ນໆ		25,777,348,763	25,777,348,763
ກຳໄລສະສົມ		286,797,208,501	277,057,393,458
ຜົດຕ່ຽງຈາກການແປງຄ່າ		923,815,904,030	845,587,487,113
ລວມທຶນ		**1,617,153,534,779**	**1,529,185,302,819**
ລວມໜີ້ສິນ ແລະ ທຶນ		**1,902,544,976,508**	**1,816,127,972,622**

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີທີ່ຖືກແປງຄ່າເປັນເງິນກີບ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025

	ຮຸ້ນສາມັນທີ່ອອກແລ້ວ ແລະ ຖອກແລ້ວ ກີບ	*ສ່ວນເພີ່ມມູນຄ່າຮຸ້ນ ກີບ*	*ຄັງສຳຮອງ ຕາມລະບຽບການ ກີບ*	*ຄັງສຳຮອງອື່ນໆ ກີບ*	*ກຳໄລສະສົມ ກີບ*	*ຜົດຕ່າງຈາກ ການແປງຄ່າ ກີບ*	*ລວມ ກີບ*
ຍອດຍົກມາ ວັນທີ 1 ມັງກອນ 2024	**330,000,000,000**	**24,735,724,722**	**20,181,970,566**	**19,931,970,566**	**250,094,367,876**	**869,765,106,550**	**1,514,709,140,280**
ກຳໄລສຸດທິພາຍໃນໄລຍະ	-	-	-	-	31,415,110,962	-	31,415,110,962
ຈ່າຍເງິນປັນຜົນ	-	-	-	-	(19,800,000,000)	-	(19,800,000,000)
ຜົດຕ່າງຈາກການແປງຄ່າ	-	-	-	-	-	92,542,831,605	92,542,831,605
ຍອດເຫຼືອໃນວັນທີ 31 ມິຖຸນາ 2024	**330,000,000,000**	**24,735,724,722**	**20,181,970,566**	**19,931,970,566**	**261,709,478,838**	**962,307,938,155**	**1,618,867,082,847**
ຍອດຍົກມາ ວັນທີ 1 ມັງກອນ 2025	**330,000,000,000**	**24,735,724,722**	**26,027,348,763**	**25,777,348,763**	**277,057,393,458**	**845,587,487,113**	**1,529,185,302,819**
ກຳໄລສຸດທິພາຍໃນໄລຍະ	-	-	-	-	29,539,815,043	-	29,539,815,043
ຈ່າຍເງິນປັນຜົນ	-	-	-	-	(19,800,000,000)	-	(19,800,000,000)
ຜົດຕ່າງຈາກການແປງຄ່າ	-	-	-	-	-	78,228,416,917	78,228,416,917
ຍອດເຫຼືອໃນວັນທີ 30 ມິຖຸນາ 2025	**330,000,000,000**	**24,735,724,722**	**26,027,348,763**	**25,777,348,763**	**286,797,208,501**	**923,815,904,030**	**1,617,153,534,779**

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025

ໃບລາຍງານກະແສເງິນສົດທາງປີທີ່ຖືກແປງຄ່າເປັນເງິນກີບ
ນະວັນທີ 30 ມິຖຸນາ 2025 ແລະ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດັ່ງກ່າວ

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ກຳໄລພາຍໃນໄລຍະ		**35,848,007,622**	**37,427,311,412**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນໃນລະຫວ່າງປີ	16.2	14,634,418,844	13,800,165,792
ການເຊື່ອມມູນຄ່າພາຍໃນລະຫວ່າງປີ	16.3	19,243,881	-
ກຳໄລຈາກການສະສາງຊັບສິນ, ອາຄານ ແລະ ອຸປະກອນ		75,321,710	17,400,782
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ທັນເກີດຂຶ້ນຈິງ	10	(843,418,139)	(2,192,091,482)
ລາຍຈ່າຍດອກເບ້ຍ	9	4,425,382,326	4,016,205,629
ສຳຮອງເງິນແຮເຄື່ອງໃນສາງເຄື່ອນໄຫວຊ້າ ແລະ ລ້າສະໄໝ	5	531,820,405	260,356,524
ສຳຮອງເງິນແຮໜີ້ສິງໄສຈະເສຍ/(ເກັບຄືນ)	8	180,981,194	(1,219,658,248)
ສຳຮອງສຳລັບການສົ່ງຄືນສິນຄ້າຂອງໜີ້ຕ້ອງຮັບ		(198,706,181)	(150,074,500)
ການປ່ຽນແປງຂອງທຶນໝຸນວຽນ:			
ປ່ຽນແປງໃນໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(598,112,193)	(1,511,572,210)
ປ່ຽນແປງໃນເຄື່ອງໃນສາງ		15,563,130,145	(28,993,105,370)
ປ່ຽນແປງໃນຊັບສິນໝຸນວຽນ ແລະ ຊັບສິນບໍ່ໝຸນວຽນ		(7,665,698,743)	(7,735,512,896)
ປ່ຽນແປງໃນໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		10,204,580,501	10,411,946,879
ປ່ຽນແປງໃນເງິນມັດຈຳຈາກລູກຄ້າ		(717,999,951)	(1,520,849,979)
ປ່ຽນແປງໃນໜີ້ສິນໝຸນວຽນອື່ນໆ		(10,538,008,095)	13,094,387
ຈ່າຍອາກອນກຳໄລ	24	(11,668,993,189)	-
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳການດຳເນີນງານ		**49,251,950,137**	**22,623,616,720**
ກິດຈະກຳການລົງທຶນ			
ເພີ່ມຂຶ້ນຈາກເງິນຝາກປະຈຳທະນາຄານ		32,163,266,088	-
ລົງທຶນໃນເງິນຝາກປະຈຳທະນາຄານ		(32,483,298,586)	(32,835,037,500)
ຊື້ທີ່ດິນ, ອາຄານ ແລະ ອຸປະກອນ ແລະ ຊັບສິນພວມກໍ່ສ້າງ		(1,224,681,592)	(49,724,073,598)
ຊື້ຊອບແວຄອມພິວເຕີ		(576,058,497)	(74,153,110)
ລາຍຮັບຈາກການສະສາງທີ່ດິນ, ອາຄານ ແລະ ອຸປະກອນ		761,677,346	-
ເງິນສົດສຸດທິ ໃຊ້ໄປສຳລັບການລົງທຶນ		**(1,359,095,241)**	**(82,633,264,208)**
ກິດຈະກຳການເງິນ			
ເພີ່ມຂຶ້ນເງິນກູ້ທະນາຄານ		204,688,555,263	184,406,123,144
ຈ່າຍເງິນກູ້ຢືມທະນາຄານ		(211,051,037,707)	(162,121,413,636)
ຈ່າຍດອກເບ້ຍ		(4,384,671,779)	(4,026,926,027)
ຈ່າຍເງິນປັນຜົນ	26	(19,800,000,000)	(19,800,000,000)
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳການການເງິນ		**(30,547,154,223)**	**(1,542,216,519)**

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ການປ່ຽນແປງເພີ່ມຂຶ້ນ/(ຫຼຸດລົງ)ສຸດທິຂອງເງິນສົດ		**17,345,700,673**	**(61,551,864,006)**
ເງິນສົດໃນຕົ້ນໄລຍະ	11	18,620,031,453	97,622,510,973
ຜົດຕ່າງຈາກການແປງຄ່າ		1,518,915,199	4,990,745,261
ເງິນສົດໃນທ້າຍໄລຍະ	**11**	**37,484,647,325**	**41,061,392,228**

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ
ນະວັນທີ 30 ມິຖຸນາ 2025 ແລະ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດັ່ງກ່າວ

1. ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ("ບໍລິສັດ") ເປັນບໍລິສັດມະຫາຊົນ ທີ່ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ (ຕລຊລ) ສ້າງຕັ້ງ ແລະ ດຳເນີນທຸລະກິດໃນ ສປປ ລາວ. ບໍລິສັດດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດ ສະບັບລ່າສຸດ ເລກທີ 3271/ຈຫວ, ລົງວັນທີ 29 ສິງຫາ 2024. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນ ເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ. ເຟີນິເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ.

ໂຄງສ້າງການຖືຮຸ້ນສ່ວນຂອງບໍລິສັດນະວັນທີ 30 ມິຖຸນາ 2025 ມີລາຍລະອຽດດັ່ງນີ້:

ຂາຮຸ້ນ	*ຈຳນວນຮຸ້ນ (ມູນຄ່າຮຸ້ນ: 2,000 ກີບ/ຮຸ້ນ)*	*ອັດຕາສ່ວນຮ້ອຍຂອງຮຸ້ນ*
ທ່ານ ວັດດານາ ສຸຄະບັນດິດ (*)	28,524,440	17.29%
ທ່ານ ພັນໂນລາ ສຸຄະບັນດິດ (*)	26,844,580	16.27%
ທ່ານ ກິດສະດາ ສຸຄະບັນດິດ (*)	26,844,580	16.27%
ທ່ານນາງ ປະພັດສອນ ສຸຄະບັນດິດ (*)	840,000	0.51%
ທ່ານນາງ ວຽງດາລາ ບຸບຜາ (*)	840,000	0.51%
ທ່ານ ອານຸສອນ ອຸ່ນໄຕ (*)	28,000	0.02%
ທ່ານ ບຸນທະວີ ສິມມາໄຊ (*)	22,400	0.01%
ທ່ານ ສຸວັນນີ ສີສົມໃຈ (*)	28,000	0.02%
ທ່ານ ໄຊສົງຄົມ ຊຸ່ມມະນີວົງ(*)	28,000	0.02%
Global House International Limited	56,000,000	33.94%
ຂາຮຸ້ນທີ່ເປັນບໍລິສັດມະຫາຊົນ ແລະ ບຸກຄົນອື່ນໆ	25,000,000	15.15%
	165,000,000	

(*) ຂາຮຸ້ນເຫຼົ່ານີ້ເປັນຕົວແທນໃຫ້ແກ່ ຄອບຄົວສຸຄະບັນດິດ ທີ່ມີອັດຕາສ່ວນການຖືຮຸ້ນທັງໝົດ 50.92%

ທຶນຈົດທະບຽນເບື້ອງຕົ້ນຂອງບໍລິສັດແມ່ນ 330,000,000,000 ກີບ ຫຼື ທຽບເທົ່າ 1,328,295,734 ບາດ. ທຶນຈົດທະບຽນຖອກແລ້ວຕົວຈິງຂອງບໍລິສັດມາຮອດວັນທີ 30 ມິຖຸນາ 2025 ແມ່ນ 330,000,000,000 ກີບ ຫຼື ທຽບເທົ່າ 1,328,295,734 ບາດ (31 ທັນວາ 2024: 330,000,000,000 ກີບ ຫຼື ທຽບເທົ່າ 1,328,295,734 ບາດ).

1. ຂໍ້ມູນທົ່ວໄປ (ຕໍ່)

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ບ້ານເລກທີ 366 ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດມີ 8 ສາຂາໃນ ສປປ ລາວ ໃນນັ້ນ 3 ສາຂາຕັ້ງຢູ່ທີ່ ນະຄອນຫຼວງວຽງຈັນ ແລະ 5 ສາຂາຕັ້ງຢູ່ທີ່ແຂວງອື່ນໆ ດັ່ງ ລາຍລະອຽດລຸ່ມນີ້:

- ສາຂາ ໂພນຕ້ອງສະຫວາດ ສະຖານທີ່ຕັ້ງຢູ່ບ້ານເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບຸລີ, ນະຄອນຫຼວງ ວຽງຈັນ;
- ສາຂາ ສີໄຄ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ໂຊກໃຫຍ່ ສະຖານທີ່ຕັ້ງຢູ່ຖະໜົນ 450 ປີ, ບ້ານ ໂຊກໃຫຍ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ປາກຊັນ ສະຖານຕັ້ງຢູ່ຖະໜົນ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ;
- ສາຂາ ທ່າແຂກ ສະຖານທີ່ຕັ້ງຢູ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ;
- ສາຂາ ສະຫວັນນະເຂດ ສະຖານທີ່ຕັ້ງຢູ່ ຖະໜົນເລກ 9, ບ້ານ ໂພນສະຫວ່າງເໜືອ, ເມືອງ ໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ;
- ສາຂາ ປາກເຊ ສະຖານທີ່ຕັ້ງຢູ່ ບ້ານ ກາງ, ເມືອງ ນະຄອນປາກເຊ, ແຂວງ ຈຳປາສັກ;
- ສາຂາ ຫຼວງພະບາງ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ພອນໄຊ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ.

ບໍລິສັດຍັງປະກອບມີ 3 ສາຂາ ທີ່ພວມກໍ່ສ້າງດັ່ງນີ້:

- ສາຂາ ສົມສະໜຸກ ສະຖານທີ່ຕັ້ງຢູ່ ຖະໜົນຫຼັກ 5, ບ້ານ ສົມສະໜຸກ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ;
- ສາຂາ ອຸດົມໄຊ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ນາສາວ, ເມືອງ ໄຊ, ແຂວງ ອຸດົມໄຊ;
- ສາຂາ ວັງວຽງ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ຂັນໝາກ, ເມືອງ ວັງວຽງ, ແຂວງ ວຽງຈັນ.

ຈຳນວນພະນັກງານຂອງບໍລິສັດນະວັນທີ 30 ມິຖຸນາ 2025 ແມ່ນ 745 ຄົນ (31 ທັນວາ 2024: 733 ຄົນ).

2. ພື້ນຖານໃນການກະກຽມບົດລາຍງານ

2.1 ນະໂຍບາຍການບັນຊີ

ອີງຕາມກົດໝາຍການບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ, ລວມທັງບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນກາງປີ. ອີງຕາມແຈ້ງການທາງລັດຖະການ ສະບັບເລກທີ 1137/ກງ, ລົງວັນທີ 27 ເມສາ 2020 ອອກໂດຍກະຊວງການເງິນ, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ ເລື່ອນເວລາການນຳໃຊ້ IFRS ໄປຈົນເຖິງວັນທີ 1 ມັງກອນ 2026. ເຊິ່ງຄະນະບໍລິຫານກຳລັງກະກຽມການນຳໃຊ້ IFRSs ອີງ ຕາມການແຈ້ງການດັ່ງກ່າວ.

2. ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

2.2 *ຈຸດປະສົງຂອງການກະກຽມເອກະສານລາຍງານເງິນກາງປີທີ່ຖືກແປງຄ່າເປັນເງິນກີບ*

ບໍລິສັດນຳໃຊ້ສະກຸນເງິນບາດເປັນສະກຸນເງິນທາງບັນຊີ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 2.4. ບໍລິສັດໄດ້ມີການກະກຽມເອກະສານລາຍງານການເງິນກາງປີສະກຸນເງິນບາດ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ໃນວັນທີ 22 ສິງຫາ 2025.

ນອກຈາກເອກະສານລາຍງານການເງິນກາງປີສະກຸນເງິນບາດແລ້ວນັ້ນ, ບໍລິສັດຍັງໄດ້ມີກະກຽມເອກະສານລາຍງານການເງິນເພື່ອນຳສະເໜີເປັນສະກຸນເງິນກີບ (ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ) ໂດຍການແປງຄ່າຈາກເອກະສານລາຍງານການເງິນກາງປີສະກຸນເງິນບາດ. ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນສະກຸນເງິນກີບແມ່ນເພື່ອຊ່ວຍບໍລິສັດໃນການນຳສົ່ງເອກະສານລາຍງານການເງິນໃຫ້ກັບຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຮຸ້ນ.

ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນສະກຸນເງິນກີບແມ່ນຖືກກະກຽມໂດຍອີງໃສ່ເອກະສານລາຍງານການເງິນກາງປີສະກຸນເງິນບາດທີ່ໄດ້ກະກຽມໂດຍອີງຕາມບົດອະທິບາຍຊ້ອນທ້າຍເລກທີ 3 ຂອງເອກະສານລາຍງານການເງິນກາງປີສະກຸນເງິນບາດ ແລະ ຂໍ້ກຳນົດກົດລະບຽບທີ່ກ່ຽວຂ້ອງກັບການກະກຽມເອກະສານລາຍງານການເງິນ.

ດັ່ງນັ້ນ, ເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນສະກຸນເງິນກີບ ບໍ່ໄດ້ຖືກອອກແບບສຳລັບການນຳໃຊ້ສຳລັບບຸກຄົນອື່ນທີ່ບໍ່ໄດ້ຮັບຂໍ້ມູນກ່ຽວກັບຫຼັກການ, ວິທີ ແລະ ການປະຕິບັດທາງດ້ານການບັນຊີຂອງປະເທດລາວ ແລະ ນອກຈາກນັ້ນ, ຍັງບໍ່ມີຈຸດປະສົງໃນການນຳສະເໜີໃບລາຍງານຖານະທາງການເງິນ ແລະ ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານກະແສເງິນສົດຂອງບໍລິສັດໂດຍອີງຕາມຫຼັກການ ແລະ ການປະຕິບັດທາງບັນຊີທີ່ຖືກຍອມຮັບໂດຍທົ່ວໄປໃນປະເທດອື່ນນອກເໜືອຈາກປະເທດລາວ.

2.3 *ປີການບັນຊີ*

ປີການບັນຊີຂອງບໍລິສັດແມ່ນເລີ່ມໃນວັນທີ 1 ມັງກອນ ແລະສິ້ນສຸດໃນວັນທີ 31 ທັນວາ.

2.4 *ສະກຸນເງິນທາງບັນຊີ*

ບໍລິສັດນຳໃຊ້ສະກຸນເງິນບາດໃນການບັນທຶກທາງບັນຊີ ເນື່ອງຈາກເປັນສະກຸນເງິນຫຼັກທີ່ບໍລິສັດໃຊ້ໃນການເຮັດທຸລະກຳສ່ວນໃຫຍ່ທັງການຊື້ ແລະ ການຂຳລະສິນຄ້າ. ທຸກມູນຄ່າທີ່ນຳສະເໜີແມ່ນເປັນສະກຸນເງິນບາດນອກຈາກທີ່ໄດ້ມີການລະບຸອື່ນໆ.

2.5 *ສະກຸນເງິນເພື່ອການນຳສະເໜີ*

ເນື່ອງຈາກວັດຖຸປະສົງຂອງການລາຍງານໃຫ້ທາງຕະຫຼາດຫຼັກຊັບລາວ, ບໍລິສັດຈຶ່ງໄດ້ມີການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບເພື່ອການນຳສະເໜີ.

2.6 *ການຕັດສິນ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ*

ບໍລິສັດໄດ້ມີການຕັ້ງສົມມຸດຖານ ແລະ ການຄາດຄະເນໂດຍຄຳນຶງເຖິງເຫດການທີ່ຈະເກີດຂຶ້ນໃນອະນາຄົດ. ຜົນຂອງການຄາດຄະເນອາດຈະບໍ່ທຽບເທົ່າກັບຈຳນວນຕົວຈິງທີ່ຈະເກີດຂຶ້ນໃນອານາຄົດ. ການຄາດຄະເນ ແລະ ການຕັ້ງສົມມຸດຖານ ຈະມີຄວາມສ່ຽງທີ່ຕ້ອງເຮັດໃຫ້ມີການດັດແກ້ ສຳລັບຈຳນວນທີ່ຕັ້ງປະມານການໄວ້ຂອງຊັບສິນ ແລະ ໜີ້ສິນ ໃນປີການບັນຊີຕໍ່ໄປຈາກທີ່ເປີດເຜີຍເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

2. ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

2.6 *ການຕັດສິນ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ* (ຕໍ່)

ອາກອນ

ຄວາມບໍ່ແນ່ນອນໃນການຕີຄວາມໝາຍຂອງລະບຽບການພາສີອາກອນທີ່ຊັບຊ້ອນ, ການປ່ຽນແປງກົດໝາຍພາສີອາກອນ, ແລະ ຈຳນວນ ແລະ ເວລາຂອງລາຍຮັບທຸລະກິດໃນອະນາຄົດ. ເນື່ອງຈາກລັກສະນະໄລຍະຍາວ ແລະ ຄວາມຊັບຊ້ອນຂອງສັນຍາທີ່ມີຢູ່ແລ້ວ, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນໄດ້ຮັບຕົວຈິງ ແລະ ການສົມມຸດຕິຖານທີ່ໄດ້ເຮັດ, ຫຼື ການປ່ຽນແປງໃນອະນາຄົດຂອງສົມມຸດຕິຖານດັ່ງກ່າວ, ອາດຈະຈຳເປັນຕ້ອງມີການດັດແກ້ໃນອະນາຄົດຕໍ່ລາຍຮັບທຸລະກິດ ແລະ ລາຍຈ່າຍທາງອາກອນທີ່ຖືກບັນທຶກໄວ້ແລ້ວ. ບໍລິສັດໄດ້ບັນທຶກເງິນແຮ ອີງໃສ່ການຕັ້ງປະມານການທີ່ສົມເຫດສົມຜົນ ສຳລັບຜົນສະທ້ອນທີ່ເປັນໄປໄດ້ຂອງການກວດສອບໂດຍກົມພາສີ-ອາກອນຂອງ ສປປ ລາວ. ຈຳນວນປະມານການດັ່ງກ່າວແມ່ນອີງໃສ່ປັດໄຈຕ່າງໆ ເຊັ່ນ: ອີງຕາມການກວດສອບໂດຍກົມພາສີ-ອາກອນທີ່ຜ່ານມາ ແລະ ການຕີຄວາມໝາຍທີ່ແຕກຕ່າງກັນຂອງຫົວໜ່ວຍທຸລະກິດ ແລະ ກົມພາສີ-ອາກອນ ຜູ້ຮັບຜິດຊອບ. ຄວາມແຕກຕ່າງໃນການຕີຄວາມໝາຍດັ່ງກ່າວອາດເກີດຂຶ້ນໄດ້ກັບເງື່ອນໄຂທີ່ເປັນຢູ່ໃນ ສປປ ລາວ.

ບໍລິສັດບໍ່ຮັບຮູ້ອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບ ໃນອານາຄົດສຳລັບສ່ວນຕ່າງທີ່ເກີດຂຶ້ນຊົ່ວຄາວ. ລາຍຈ່າຍອາກອນກຳໄລຖືກຮັບຮູ້ອີງຕາມຜົນການດຳເນີນງານສຳລັບໄລຍະເວລານັ້ນໆ ແລະ ຕາມອັດຕາທີ່ກຳນົດ.

ຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າ

ບໍລິສັດໄດ້ກຳນົດສຳຮອງໜີ້ສົງໄສຈະສູນທີ່ສະທ້ອນໃຫ້ເຫັນເຖິງຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບຈາກການຄ້າ, ທີ່ກ່ຽວຂ້ອງກັບເງິນສຳຮອງຂາດທຶນຈາກການຮຽກເກັບເງິນກັບລູກຄ້າ. ການສຳຮອງໜີ້ສົງໄສຈະສູນເປັນຜົນມາຈາກການປະເມີນເງິນສົດທີ່ຄາດວ່າຈະໄດ້ຮັບໃນອະນາຄົດຂອງບໍລິສັດ ເຊິ່ງການປະເມີນການແມ່ນຢູ່ເທິງພື້ນຖານພິຈາລະນາປະສົບການທີ່ຜ່ານມາໃນການຮຽກເກັບເງິນຈາກລູກຄ້າ ແລະ ການຜິດນັດໃນການຊຳລະໜີ້ໂດຍຈະພິຈາລະນາຕາມແນວໂນ້ມຂອງຕະຫຼາດ.

ເງິນແຮສຳລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງ

ບໍລິສັດໄດ້ປະເມີນເງິນແຮເພື່ອການສູນເສຍມູນຄ່າຂອງເຄື່ອງໃນສາງ ເພື່ອສະທ້ອນໃຫ້ເຫັນເຖິງມູນຄ່າສຸດທິຂອງເຄື່ອງໃນສາງ. ເງິນແຮເພື່ອການສູນເສຍມູນຄ່າຂອງເຄື່ອງໃນສາງແມ່ນໄດ້ສະແດງການວິເຄາະຄວາມລ້າສະໄໝຂອງສິນຄ້າ ແລະ ການຄາດຄະການທີ່ກ່ຽວກັບການຂາຍສິນຄ້າໃນອະນາຄົດ. ຍອດເຫຼືອຂອງສິນຄ້າຄ້າງສາງ ແມ່ນຈະຖືກຕັດອອກທາງບັນຊີ ເມື່ອຮັບຮູ້ວ່າສິນຄ້າດັ່ງກ່າວແມ່ນໄດ້ລ້າສະໄໝ ຫຼື ບໍ່ສາມາດຂາຍໄດ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

3.1 *ການແປງຄ່າຈາກເອກະສານລາຍງານການເງິນກາງປີສະກຸນເງິນບາດ ມາເປັນ ເອກະສານລາຍງານເງິນກາງປີທີ່ຖືກແປງຄ່າເປັນເງິນກີບ*

ບໍລິສັດໄດ້ມີການແປງຄ່າເອກະສານລາຍງານການເງິນກາງປີຈາກສະກຸນເງິນກີບ ໂດຍການປະຕິບັດຕາມຂັ້ນຕອນລຸ່ມນີ້:

- ລາຍການໃນໃບລາຍງານຖານະການເງິນກາງປີນະວັນທີ 30 ມິຖຸນາ 2025 ທີ່ຖືກແປງຄ່າເປັນເງິນກີບ ແມ່ນຖືກແປງຄ່າ ໂດຍນຳໃຊ້ອັດຕາແລກປ່ຽນນະມື້ປິດບັນຊີຂອງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເຊິ່ງແມ່ນ 661.23 ກີບ/ບາດ ຍົກເວັ້ນລາຍການຂອງທຶນຈົດທະບຽນ, ສ່ວນເພີ່ມມູນຄ່າຮຸ້ນ, ຄ້ຳສຳຮອງຕາມລະບຽບການ, ຄ້ຳສຳຮອງອື່ນໆ ທີ່ຖືກແປງຄ່າດ້ວຍອັດຕາແລກປ່ຽນເດີມຂອງບໍລິສັດ;
- ລາຍການໃນໃບລາຍງານຜົນການດຳເນີນງານກາງປີທີ່ຖືກແປງຄ່າເປັນເງິນກີບ ແລະ ໃບລາຍງານກະແສເງິນສົດກາງປີທີ່ຖືກແປງຄ່າເປັນເງິນກີບສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ແມ່ນຖືກແປງຄ່າໂດຍນຳໃຊ້ອັດຕາແລກປ່ຽນສະເລ່ຍພາຍໃນໄລຍະຂອງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເຊິ່ງແມ່ນ 640.06 ກີບ/ບາດ;
- ທຸກສ່ວນຕ່າງຈາກອັດຕາແລກປ່ຽນທີ່ເກີດຈາກການແປງຄ່າ ຈາກສະກຸນເງິນບາດເປັນສະກຸນເງິນກີບ ແມ່ນຖືກນຳສະເໜີໃນລາຍການສ່ວນຜິດຕ່ຳງຈາກການແປງຄ່າໃນໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີ.

3.2 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດ ລວມມີເງິນສົດໃນຄັງ, ເງິນຝາກທະນາຄານ ແລະ ເງິນຝາກມີກຳນົດໄລຍະສັ້ນອື່ນໆທີ່ມີໄລຍະເວລາຄົບກຳນົດ 3 ເດືອນ ຫຼື ຕ່ຳກວ່າ, ການລົງທຶນທີ່ມີສະພາບຄ່ອງສູງ ແມ່ນສາມາດປ່ຽນແປງເປັນເງິນສົດ ແລະ ມີຄວາມສ່ຽງໜ້ອຍທີ່ຈະມີການປ່ຽນແປງມູນຄ່າໂດຍມີໄລຍະເວລາຄົບກຳນົດ 3 ເດືອນ ຫຼື ຕ່ຳກວ່າ. ເງິນເບີກເກີນບັນຊີແມ່ນຖືວ່າເປັນກິດຈະກຳທາງການເງິນທີ່ຄ້າຍຄືກັບການກູ້ຢືມ. ຢ່າງໃດກໍຕາມ, ຖ້າຫາກບໍລິສັດຊຳລະຄືນຕາມຄວາມຕ້ອງການ ແລະ ປະກອບເປັນພາກສ່ວນໜຶ່ງທີ່ສຳຄັນຂອງການບໍລິຫານເງິນສົດຂອງບໍລິສັດ, ເງິນເບີກເກີນບັນຊີແມ່ນສ່ວນປະກອບຂອງເງິນສົດ ແລະ ທຽບເທົ່າເງິນສົດ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 *ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ*

ໜີ້ຕ້ອງຮັບການຄ້າ ແມ່ນຖືກຮັບຮູ້ ແລະ ບັນທຶກ ຕາມຈຳນວນຂອງບິນຂາຍຕົ້ນສະບັບ ແລະ ປະເມີນມູນຄ່າພາຍຫຼັງດ້ວຍມູນຄ່າທີ່ເຫຼືອຢູ່ ຫັກດ້ວຍເງິນແຮສຳລັບໜີ້ສົງໄສ.

ການຫັກເງິນແຮສຳລັບໜີ້ສົງໄສ

ເງິນແຮສຳລັບໜີ້ສົງໄສແມ່ນໄດ້ສ້າງຂຶ້ນສຳລັບການຄາດຄະເນຄວາມສູນເສຍທີ່ເກີດຂຶ້ນອີງໃສ່ຈຳນວນວັນທີ່ເກີນກຳນົດຊຳລະ ໂດຍໃຊ້ອັດຕາເງິນແຮດັ່ງຕໍ່ໄປນີ້

ຈຳນວນວັນທີ່ເກີນກຳນົດຊຳລະ	*ອັດຕາເງິນແຮ*
0 – 180 ວັນ	0%
ຫຼາຍກວ່າ 180 ວັນ	100%

ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງຍອດເຫຼືອເງິນແຮ ແມ່ນໄດ້ຖືກບັນທຶກເຂົ້າໃນລາຍຈ່າຍບໍລິຫານ ຂອງໃບລາຍງານຜົນການດຳເນີນງານກາງປີສຳລັບເອກະສານລາຍງານການເງິນກາງປີ.

3.4 *ເຄື່ອງໃນສາງ*

ເຄື່ອງໃນສາງສະແດງອອກຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ມູນຄ່າສຸດທິທີ່ຈະໄດ້ຮັບ. ຕົ້ນທຶນ ໄດ້ນຳໃຊ້ວິທີການຄິດໄລ່ແບບຖ່ວງສະເລ່ຍຕາມນ້ຳໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງເຊັ່ນ: ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ຄ່າຂົນສົ່ງ, ຫັກດ້ວຍສ່ວນຫຼຸດທີ່ໄດ້ຮັບ, ຄ້ຳສຳຮອງ ຫຼື ສ່ວນຫຼຸດການຄ້າຈາກຜູ້ສະໜອງ.

ມູນຄ່າຂາຍອອກໄດ້ສຸດທິ

ມູນຄ່າຂາຍອອກໄດ້ສຸດທິ ("NRV") ຖືກປະເມີນດ້ວຍລາຄາຂາຍສິນຄ້າ ໃນຂະນະທີ່ດຳເນີນທຸລະກິດຕາມປົກກະຕິ ຫັກໃຫ້ຕົ້ນທຶນປ່ຽນແປງອື່ນໆທີ່ກ່ຽວຂ້ອງກັບການຂາຍ.

ເງິນແຮສຳລັບສິນຄ້າລ້າສະໄໝ

ເງິນແຮສຳລັບສິນຄ້າໃນສາງ ແມ່ນໄດ້ສ້າງຂຶ້ນສຳລັບການຄາດຄະເນຄວາມສູນເສຍທີ່ເກີດຂຶ້ນເນື່ອງຈາກເກີດມີຄ່າເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງສິນຄ້າໃນສາງທີ່ເປັນຂອງບໍລິສັດໂດຍອີງໃສ່ຫຼັກຖານທີ່ສົມເຫດສົມຜົນຂອງຄ່າເສື່ອມມູນຄ່າ ນະວັນທີຂອງໃບລາຍງານຖານະການເງິນກາງປີ ສຳລັບຫົກເດືອນຕົ້ນປີ.

ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງຍອດເຫຼືອເງິນແຮ ແມ່ນໄດ້ຖືກບັນທຶກເຂົ້າໃນຕົ້ນທຶນສິນຄ້າທີ່ຂາຍໃນໃບລາຍງານຜົນການດຳເນີນງານກາງປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.5 *ຊັບສິນ, ອາຄານ ແລະ ອຸປະກອນ*

ຊັບສິນ, ອາຄານ ແລະ ອຸປະກອນ ແມ່ນໄດ້ຖືກລາຍງານຕາມມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າຫຼຸຍຫ້ຽນສະສົມ.

ຕົ້ນທຶນຂອງລາຍການຊັບສິນ, ອາຄານ ແລະ ອຸປະກອນ ແມ່ນປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງໃນການເຮັດໃຫ້ເປັນຊັບສິນບັດຢູ່ໃນສະພາບທີ່ສາມາດໃຊ້ງານໄດ້ຕາມຈຸດປະສົງ.

ລາຍຈ່າຍໃນການຊື້ເຂົ້າເພີ່ມ, ການປັບປຸງ ແລະ ການສ້ອມແປງຍືດອາຍຸການໃຊ້ ແມ່ນຖືກຮັບຮູ້ເພີ່ມເຂົ້າໃນມູນຄ່າຂອງຊັບສິນ ແລະ ຄ່າໃຊ້ຈ່າຍໃນການບຳລຸງຮັກສາ ແລະ ສ້ອມແປງແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານການງປີຂອງເອກະສານລາຍງານການເງິນກາງປີສຳລັບວັດຖຸປະສົງພິເສດສະບັບນີ້.

ເມື່ອລາຍການຊັບສິນ, ອາຄານ ແລະ ອຸປະກອນ ຖືກຂາຍ ຫຼື ໝົດອາຍຸການໃຊ້ງານ, ຜົນກຳໄລ ຫຼື ຂາດທຶນໃດໆທີ່ມາຈາກການສະສາງ (ຄວາມແຕກຕ່າງລະຫວ່າງມູນຄ່າສະສາງສຸດທິ ແລະ ມູນຄ່າຕາມບັນຊີ) ແມ່ນຖືກລວມເຂົ້າໃນເອກະສານລາຍງານຜົນການດຳເນີນງານການງປີ

ຄ່າຫຼຸ້ຍຫ້ຽນ

ຄ່າຫຼຸຍຫ້ຽນ ຂອງຊັບສິນ, ອາຄານ ແລະ ອຸປະກອນ ແມ່ນການຫັກສ່ວນທີ່ຫຼຸດລົງຂອງມູນຄ່າຊັບສິນ ແລະ ຫັກດ້ວຍມູນຄ່າຊາກ ຕາມອາຍຸການໃຊ້ງານຂອງຊັບສິນ ໂດຍການຄິດໄລ່ວິທີແບບເສັ້ນຊື່. ອາຍຸການໃຊ້ງານຂອງຊັບສິນຖືກປະເມີນໄວ້ດັ່ງນີ້:

ອາຄານ	20 - 30 ປີ
ເຄື່ອງຈັກ ແລະ ອຸປະກອນ	3 - 5 ປີ
ເຄື່ອງຕົກແຕ່ງ ແລະ ອຸປະກອນຕິດຕັ້ງ	2 - 10 ປີ
ພາຫະນະ	3 - 5 ປີ

3.6 *ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບດ້ວຍ ຊອບແວ ຄອມພິວເຕີ ແລະ ທີ່ດິນທີ່ບໍ່ກຳນົດອາຍຸການນຳໃຊ້. ຊັບສິນບັດຄົງທີ່ບໍ່ມີຕົວຕົນແມ່ນໄດ້ຖືກລາຍງານຕາມມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າເຊື່ອມມູນຄ່າສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ແມ່ນປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງໃນການເຮັດໃຫ້ເປັນຊັບສິນບັດຄົງທີ່ບໍ່ມີຕົວຕົນຢູ່ໃນສະພາບທີ່ສາມາດໃຊ້ງານໄດ້ຕາມຈຸດປະສົງ.

ລາຍຈ່າຍໃນການຊື້ເຂົ້າເພີ່ມ, ການປັບປຸງ ແລະ ການສ້ອມແປງຍືດອາຍຸການໃຊ້ ແມ່ນຖືກຮັບຮູ້ເພີ່ມເຂົ້າໃນມູນຄ່າຂອງຊັບສິນ ແລະ ຄ່າໃຊ້ຈ່າຍອື່ນໆ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານການງປີຂອງເອກະສານລາຍງານການເງິນກາງປີສະບັບນີ້.

ເມື່ອຊັບສິນບັດຄົງບໍ່ມີຕົວຕົນຖືກຂາຍ ຫຼື ສະສາງອອກ, ຕົ້ນທຶນເດີມ ແລະ ຄ່າຫຼຸ້ຍຫ້ຽນສະສົມ ຈະຖືກສະສາງອອກ (ສ່ວນຕ່າງລະຫວ່າງການສະສາງອອກ ແລະ ມູນຄ່າຕົ້ນທຶນສະສົມ) ແມ່ນບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານການງປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.6 *ຊັບສິນບັດຄົງທີ່ບໍ່ມີຕົວຕົນ* (ຕໍ່)

ຄ່າເຊື່ອມມູນຄ່າຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ຖືກຄິດໄລ່ວິທີແບບເສັ້ນຊື່ ອີງຕາມອາຍຸການໃຊ້ງານເຊິ່ງມີອາຍຸການໃຊ້ງານ ດັ່ງລຸ່ມນີ້:

ຊອບແວ ຄອມພິວເຕີ	5 ປີ
ທີ່ດິນ	ບໍ່ກຳນົດອາຍຸການນຳໃຊ້

3.7 *ໜີ້ຕ້ອງສົ່ງການຄ້າໜີ້ຕ້ອງສົ່ງອື່ນໆ ແລະ ເງິນຄ້າງຈ່າຍ*

ໜີ້ຕ້ອງສົ່ງການຄ້າ, ໜີ້ຕ້ອງສົ່ງອື່ນໆ ແລະ ເງິນຄ້າງຈ່າຍ ແມ່ນຖືກຮັບຮູ້ສຳລັບຈຳນວນທີ່ຕ້ອງຈ່າຍໃນອະນາຄົດສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ ບໍ່ວ່າບໍລິສັດຈະໄດ້ຮັບໃບຖະຫຼາກເກັບເງິນແລ້ວ ຫຼື ບໍ່ກໍຕາມ.

3.8 *ເງິນກູ້ຢືມ*

ເງິນກູ້ຢືມ ແມ່ນຮັບຮູ້ໃນເບື້ອງຕົ້ນດ້ວຍເງິນສິດທີ່ໄດ້ຮັບ; ຄ່າໃຊ້ຈ່າຍສຸດທິຂອງທຸລະກຳທີ່ເກີດຂຶ້ນ.

ເງິນກູ້ຢືມຖືກຈັດປະເພດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ວ່າບໍລິສັດມີສິດ ທີ່ຈະເລື່ອນເວລາການຊຳລະໜີ້ສິນແບບບໍ່ມີເງື່ອນໄຂຢ່າງໜ້ອຍ 12 ເດືອນຫຼັງຈາກວັນທີຂອງໃບລາຍງານຖານະທາງການເງິນສຳລັບວັດຖຸປະສົງພິເສດສະບັບນີ້.

ຕົ້ນທຶນຂອງເງິນກູ້ຢືມ

ຕົ້ນທຶນການກູ້ຢືມປະກອບດ້ວຍດອກເບ້ຍ ແລະ ຄ່າໃຊ້ຈ່າຍອື່ນໆທີ່ມີສ່ວນກ່ຽວຂ້ອງກັບການກູ້ຢືມເງິນຂອງບໍລິສັດ.

ຕົ້ນທຶນທົ່ວໄປ ແລະ ກ່ຽວຂ້ອງໂດຍກົງຂອງເງິນກູ້ຢືມ ເພື່ອໃຫ້ໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ມີຄຸນສົມບັດ ຕາມທີ່ກຳນົດ ເຊິ່ງເປັນຊັບສິນທີ່ຈຳເປັນຕ້ອງໃຊ້ໄລຍະເວລາພໍສົມຄວນໃນການກຽມໃຫ້ພ້ອມສຳລັບໃຊ້ງານ ຫຼື ຂາຍຕາມ ວັດຖຸປະສົງ ຈະຖືກລວມເຂົ້າໃນຕົ້ນທຶນຂອງຊັບສິນດັ່ງກ່າວຈົນກວ່າຈະເຖິງເວລາທີ່ຊັບສິນມີຄວາມພ້ອມສຳລັບໃຊ້ງານ ຫຼື ຂາຍ.

ຄ່າທຳນຽມທີ່ຈ່າຍໄປສຳລັບການກູ້ຢືມຈະໄດ້ຮັບຮູ້ເປັນຕົ້ນທຶນຂອງການກູ້ຢືມ ຕໍ່ເມື່ອມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ. ໃນກໍລະນີນີ້, ຄ່າທຳນຽມ ແມ່ນຈະຖືກຮັບຮູ້ຈົນຮອດມື້ຖອນເງິນ ຫາກບໍ່ມີຫຼັກຖານທີ່ມີຄວາມເປັນໄປ ໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ ຄ່າທຳນຽມແມ່ນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍຈ່າຍລ່ວງໜ້າສຳລັບການໃຫ້ບໍລິການ ແລະ ຕັດຄ່າເຊື່ອມຕາມໄລຍະເວລາຂອງເງິນກູ້ທີ່ກ່ຽວຂ້ອງ.

ຕົ້ນທຶນເງິນກູ້ຢືມອື່ນ ຈະຖືກຮັບຮູ້ເປັນລາຍຈ່າຍໃນງວດທີ່ເກີດຂຶ້ນ.

3.9 *ຄ້າງຮັບສ່ວນຫຼຸດຈາກຜູ້ສະໜອງ*

ສ່ວນຫຼຸດແມ່ນອີງໃສ່ຍອດຊື້ສິນຄ້າຄຸນກັບອັດຕາສ່ວນຫຼຸດເຊິ່ງໄດ້ລະບຸໄວ້ໃນສັນຍາກັບຜູ້ສະໜອງ. ສ່ວນຫຼຸດຖືກຊຳລະໂດຍ ຫັກກັບໃບແຈ້ງໜີ້ເມື່ອບໍລິສັດຊຳລະເງິນໃຫ້ແກ່ຜູ້ສະໜອງ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.10 *ຄ້ຳສຳຮອງຕາມລະບຽບການ*

ຄ້ຳສຳຮອງຕາມລະບຽບການແມ່ນຄ້ຳຮັບປະກັນຄວາມສ່ຽງທີ່ອາດຈະເກີດຂຶ້ນ ໂດຍທີ່ບໍລິສັດຕ້ອງຫັກ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າໃນຄ້ຳສຳຮອງ ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄ້ຳສຳຮອງນີ້ຮອດ 50% ຂອງທຶນຈົດທະບຽນ, ບໍລິສັດສາມາດໂຈະການຫັກເຂົ້າຄ້ຳສຳຮອງດັ່ງກ່າວ, ເວັ້ນເສຍແຕ່ບໍລິສັດ ມີວັດຖຸປະສົງໃນການສຳຮອງເພື່ອຈຸດປະສົງອື່ນ ໂດຍການໄດ້ຮັບການຕົກລົງອະນຸມັດຈາກເຈົ້າຂອງບໍລິສັດ.

3.11 *ເງິນຕາຕ່າງປະເທດ*

ລາຍການທຸລະກຳທີ່ເປັນສະກຸນເງິນອື່ນຈະຖືກແປງເປັນເງິນບາດດ້ວຍອັດຕາແລກປ່ຽນນະມື້ທີ່ທຸລະກຳນັ້ນເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນສະກຸນເງິນອື່ນແມ່ນຈະຖືກແປງເປັນສະກຸນເງິນບາດ ດ້ວຍອັດຕາແລກປ່ຽນນະມື້ລາຍງານເອກະສານລາຍງານການເງິນກາງປີ.

ກຳໄລ ແລະ ຂາດທຶນທີ່ເກີດການແປງຄ່າສະກຸນເງິນ ແມ່ນຮັບຮູ້ໃນໃບລາຍງານຜົນການດຳເນີນງານກາງປີ.

3.12 *ການຮັບຮູ້ລາຍຮັບ*

ລາຍຮັບແມ່ນຖືກຮັບຮູ້ຕາມມູນຄ່າຍຸຕິທຳທີ່ຄາດວ່າຈະໄດ້ຮັບ ຫຼື ເປັນໜີ້ຕ້ອງຮັບຈາກການຂາຍສິນຄ້າທີ່ເປັນກິດຈະກຳຫຼັກຂອງບໍລິສັດ. ລາຍຮັບຈະຖືກລາຍງານດ້ວຍມູນຄ່າຂາຍທີ່ບໍ່ມີອາກອນ, ການສົ່ງຄືນສິນຄ້າ, ສ່ວນຫຼຸດການຄ້າ ແລະ ສ່ວນຫຼຸດອື່ນໆ.

ບໍລິສັດມີການຮັບຮູ້ລາຍຮັບຕາມຈຳນວນທີ່ສາມາດປະມານການໄດ້ຢ່າງໜ້າເຊື່ອຖື. ຄວາມເປັນໄປໄດ້ທີ່ຜົນປະໂຫຍດທາງເສດຖະກິດຂອງບໍລິສັດ ຈະໄຫຼເຂົ້າບໍລິສັດ ແລະ ບັນລຸມາດຕະຖານທີ່ກຳນົດສຳລັບການດຳເນີນກິດຈະການຂອງບໍລິສັດ ດັ່ງລຸ່ມນີ້:

ລາຍຮັບຈາກການຂາຍສິນຄ້າ

ລາຍຮັບຈາກການຂາຍສິນຄ້າຈະຖືກຮັບຮູ້ກໍ່ຕໍ່ເມື່ອຄວາມສ່ຽງ ແລະ ລາງວັນທີ່ສຳຄັນຂອງການເປັນເຈົ້າຂອງສິນຄ້າຖືກໂອນ ຫຼື ສົ່ງໃຫ້ຜູ້ຊື້ ສ່ວນຫຼາຍຈະເປັນການສົ່ງສິນຄ້າໃຫ້ກັບລູກຄ້າແລ້ວ. ການຂາຍສິນຄ້າທີ່ຂຶ້ນກັບເງື່ອນໄຂການຕິດຕັ້ງ ແລະ ການກວດສອບຈະຖືກຮັບຮູ້ເມື່ອຜູ້ຊື້ຕົງລົງໃຫ້ຈັດສົ່ງສິນຄ້າ ແລະ ການຕິດຕັ້ງ ແລະ ການກວດສອບດຳເນີນສຳເລັດແລ້ວ.

ບໍລິສັດມີນະໂຍບາຍທີ່ຈະຂາຍສິນຄ້າໃຫ້ກັບລູກຄ້າ ໂດຍທີ່ລູກຄ້າສາມາດສົ່ງຄືນສິນຄ້າໄດ້ພາຍໃນ 30 ວັນ. ດັ່ງນັ້ນ, ໜີ້ຕ້ອງສົ່ງຈາກການສົ່ງຄືນສິນຄ້າ (ຖືກລວມໃນ ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ) ແລະ ສິດໃນການສົ່ງຄືນສິນຄ້າ (ຖືກລວມໃນຊັບສິນໝຸນວຽນອື່ນໆ) ແມ່ນຖືກຮັບຮູ້ສຳລັບສິນຄ້າທີ່ຄາດວ່າຈະມີການສົ່ງຄືນ. ປະສົບການທີ່ຜ່ານມາຖືກນຳມາໃຊ້ໃນການປະມານການການສົ່ງຄືນສິນຄ້າໂດຍການໃຊ້ວິທີການປະມານການມູນຄ່າທີ່ຄາດວ່າຈະເກີດຂຶ້ນ. ເນື່ອງຈາກຈຳນວນການສົ່ງຄືນສິນຄ້າມີມູນຄ່າທີ່ໃກ້ຄຽງກັນທຸກປີ, ຈຶ່ງເປັນໄປໄດ້ວ່າ ການກັບລາຍການທີ່ສົ່ງຜົນກະທົບໃຫຍ່ຫຼວງຕໍ່ລາຍຮັບສະສົມຈະບໍ່ເກີດຂຶ້ນ. ຄວາມຖືກຕ້ອງຂອງການປະມານການການສົ່ງຄືນສິນຄ້ານີ້ຈະຖືກປະເມີນຄືນໃໝ່ໃນມື້ລາຍງານຂອງເອກະສານລາຍງານການເງິນກາງປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.12 *ການຮັບຮູ້ລາຍຮັບ* (ຕໍ່)

ລາຍຮັບອື່ນໆປະກອບມີ ລາຍຮັບດອກເບ້ຍ ແລະ ລາຍຮັບຄ່າເຊົ່າຖືກຮັບຮູ້ບົນພື້ນຖານດັ່ງຕໍ່ໄປນີ້:

- ▶ ລາຍຮັບດອກເບ້ຍແມ່ນຖືກຮັບຮູ້ຕາມເກນຄ້າງຮັບຄ້າງຈ່າຍ ອີງຕາມອັດຕາດອກເບ້ຍທີ່ລະບຸໃນສັນຍາ;
- ▶ ລາຍຮັບຄ່າເຊົ່າຈາກການເຊົ່າປ້າຍໂຄສະນາສຳລັບຜູ້ສະໜອງທີ່ຖືກຮັບຮູ້ໃນ ໃບລາຍງານຜົນການດຳເນີນງານການງປີ ດ້ວຍ ວິທີຄິດໄລ່ແບບເສັ້ນຊື່ ອີງຕາມໄລຍະເວລາຂອງສັນຍາ.

3.13 *ການເກັບອາກອນ*

ອາກອນພາຍໃນໄລຍະ

ອາກອນກຳໄລພາຍໃນປີຈະຖືກຫັກເງິນແຮໄວ້ເພື່ອມອບອາກອນ ອີງຕາມກົດໝາຍອາກອນລາຍໄດ້ ແຫ່ງ ສປປ ລາວ. ບໍລິສັດ ມີພັນທະໃນການມອບອາກອນກຳໄລໃນອັດຕາ 20% ຂອງກຳໄລກ່ອນອາກອນທັງໝົດ ອີງຕາມກົດໝາຍອາກອນລາຍໄດ້ ສະບັບປັບປຸງ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ທີ່ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນໄປ. ຈາກທີ່ໄດ້ກ່າວມານັ້ນ, ບໍລິສັດ ມີພັນທະໃນການມອບອາກອນກຳໄລໃນອັດ 20%. ການຄືນພາສີຂອງບໍລິສັດແມ່ນຂຶ້ນກັບ ການກວດສອບໂດຍເຈົ້າໜ້າທີ່ພາສີ-ອາກອນ. ເນື່ອງຈາກວ່າການນຳໃຊ້ກົດໝາຍພາສີ ແລະ ລະບຽບການໃນຫຼາຍປະເພດ ຂອງທຸລະກຳແມ່ນມີຄວາມອ່ອນໄຫວຕໍ່ກັບການຕີຄວາມແຕກຕ່າງກັນ, ຈຳນວນທີ່ລາຍງານໃນເອກະສານລາຍງານການເງິນ ການປີສາມາດມີການປ່ຽນແປງໃນພາຍຫລັງຕາມການກຳນົດສຸດທ້າຍໂດຍເຈົ້າໜ້າທີ່ພາສີ-ອາກອນ.

ອາກອນອື່ນໆ

ອາກອນອື່ນໆທີ່ຕ້ອງຈ່າຍລວມມີອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນຄວາມຮັບຜິດຊອບອາກອນ ທີ່ກຳນົດກ່ຽວກັບລາຍຮັບສຳລັບໄລຍະເວລາທີ່ຄິດໄລ່ໂດຍໃຊ້ ອັດຕາອາກອນທີ່ກ່ຽວຂ້ອງສຳລັບປີ.

ອາກອນລາຍໄດ້ສ່ວນບຸກຄົນແມ່ນອາກອນທີ່ຕ້ອງຈ່າຍຂອງເງິນເດືອນທີ່ຕ້ອງຈ່າຍໃຫ້ພະນັກງານສຳລັບໄລຍະເວລາທີ່ກຳນົດ ໂດຍນຳໃຊ້ອັດຕາອາກອນພາຍໃນປີ.

3.14 *ກຳໄລຕໍ່ຮຸ້ນ*

ກຳໄລຂັ້ນພື້ນຖານຕໍ່ຈຳນວນຮຸ້ນ ແມ່ນຄິດໄລ່ດ້ວຍການຫານກຳໄລສຸດທິ ຫຼັງອາກອນສຳລັບປີທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງ ບໍລິສັດ (ຫຼັງຈາກໄດ້ປັບສຳລັບເງິນໂບນັດ ແລະ ສະຫວັດດີການ) ໂດຍຈຳນວນຖ່ວງນ້ຳໜັກສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອ ໃນໄລຍະ.

ລາຍຮັບຈາກການຫັກຕໍ່ຈຳນວນຮຸ້ນບໍ່ໄດ້ຖືກຄິດໄລ່ ແລະ ນຳສະເໜີ.

3.15 *ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ*

ບັນດາຝ່າຍຕ່າງໆຖືວ່າມີສ່ວນກ່ຽວຂ້ອງຖ້າຝ່າຍໜຶ່ງມີຄວາມສາມາດຄວບຄຸມ ຫຼື ໃຊ້ອິດທິພົນທີ່ສຳຄັນຕໍ່ອີກຝ່າຍ ໃນການ ຕັດສິນໃຈດ້ານການເງິນ ແລະ ການດຳເນີນງານ ຫຼື ມີການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນດຳເນີນການໂດຍອີງໃສ່ລາຄາຂອງຕະຫຼາດ ຫຼື ບໍ່ມີແມ່ນລາຄາຕະຫຼາດ, ໂດຍອີງຕາມລາຄາທີ່ໄດ້ຕົກລົງກັນຕາມສັນຍາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.16 ການຈ່າຍເງິນປັນຜົນ

ການຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນຂອງບໍລິສັດຖືກຮັບຮູ້ເປັນໜີ້ຕ້ອງສິ່ງໃນໄລຍະເວລາຂອງເອກະສານລາຍງານການເງິນກາງ ປີ ໂດຍຈຳນວນເງິນປັນຜົນຈະຕ້ອງມີການຕົກລົງອະນຸມັດໂດຍຜູ້ຖືຮຸ້ນຂອງບໍລິສັດ.

3.17 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ໃນເວລາທີ່ພະນັກງານອອກບຳນານຂອງບໍລິສັດໂດຍກົມກອງທຶນ ສະຫວັດດີການສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ບໍລິສັດຕ້ອງໄດ້ປະກອບສ່ວນເຂົ້າໃນຜົນ ປະໂຫຍດພະນັກງານຫຼັງອອກການ ໂດຍການຈ່າຍຄ່າເບ້ຍປະກັນສັງຄົມໃຫ້ແກ່ຕົວແທນປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ, ບໍລິສັດບໍ່ມີພັນທະອື່ນໆທີ່ກ່ຽວຂ້ອງກັບຜົນປະໂຫຍດພາຍຫຼັງອອກ ການຂອງພະນັກງານ.

ນອກນັ້ນ, ບໍລິສັດ ແລະ ພະນັກງານໄດ້ຫັກເງິນເດືອນຂອງພະນັກງານຈຳນວນໜຶ່ງ, ຕັ້ງແຕ່ 0.5 - 2%, ອີງຕາມຕຳແໜ່ງ ການຈ້າງງານ. ບໍລິສັດຫຼັງຈາກນັ້ນກົງກັບການປະກອບສ່ວນຂອງພະນັກງານປະຈຳເດືອນ. ເງິນອຸດໜູນຫຼັງການຈ້າງງານແມ່ນ ຈ່າຍໃຫ້ພະນັກງານບຳນານໃນເວລາບຳນານ, ໃນອັດຕາສ່ວນເລີ່ມຕົ້ນແຕ່ 50 – 100% ຂອງກອງທຶນບຳນານທີ່ບໍລິສັດ ປະກອບສ່ວນ ແລະ ອີງໃສ່ຈຳນວນປີເຮັດວຽກລາຍລະອຽດດັ່ງລຸ່ມນີ້:

ຈຳນວນປີເຮັດວຽກ	*ອັດຕາກອງທຶນບຳນານທີ່ບໍລິສັດປະກອບສ່ວນ (*)*
ຕ່ຳກວ່າ 10 ປີ	ບໍ່ມີຜົນປະໂຫຍດເງິນບຳນານ
10 ປີ ແລະ ຫຼາຍກວ່າ	50%
15 ປີ ແລະ ຫຼາຍກວ່າ	60%
20 ປີ ແລະ ຫຼາຍກວ່າ	70%
25 ປີ ແລະ ຫຼາຍກວ່າ	80%
30 ປີ ແລະ ຫຼາຍກວ່າ	100%

(*) ພະນັກງານຈະໄດ້ຮັບເງິນບຳນານເຕັມຈຳນວນ ສຳລັບສ່ວນທີ່ພະນັກງານປະກອບສ່ວນກອງທຶນດັ່ງກ່າວ ໃນມື້ອອກບຳນານ

ບໍລິສັດບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດຫຼັງການຈ້າງງານສຳລັບພະນັກງານຂອງບໍລິສັດ.

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງເລກທີ 43/ສພຊ ອອກໂດຍປະທານປະເທດຂອງ ສປປ ລາວ ລົງວັນທີ 28 ມັງກອນ 2014, ບໍລິສັດມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຕາມເງື່ອນໄຂດັ່ງລຸ່ມນີ້:

- ໃນກໍລະນີເມື່ອພະນັກງານຂາດທັກສະຄວາມຊຳນິຊຳນານ ຫລື ບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ, ຈຶ່ງບໍ່ສາມາດເຮັດວຽກຕໍ່ ໄດ້;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫຼຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານ ພາຍໃນໜ່ວຍງານ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.17 *ຜົນປະໂຫຍດຂອງພະນັກງານ* (ຕໍ່)

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເລີກຈ້າງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ແມ່ນ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກ. ນະວັນທີ 30 ມິຖຸນາ 2025, ບໍ່ມີພະນັກງານບໍລິສັດຜູ້ທີ່ຖືກເລີກຈ້າງເກີດຂຶ້ນດັ່ງທີ່ກ່າວຂ້າງເທິງ. ດັ່ງນັ້ນ, ບໍລິສັດ ບໍ່ໄດ້ຫັກຄ່າແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນກາງປີ.

4. ລາຍຮັບຈາກການຂາຍ

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍຮັບຈາກການຂາຍສິນຄ້າ	470,413,073,511	456,016,093,182
ລາຍຮັບຈາກການໃຫ້ບໍລິການຍິນສິ່ງ	661,031,011	611,841,302
ລາຍຮັບຈາກການໃຫ້ບໍລິການສ້ອມແປງ ແລະ ບຳລຸງຮັກສາ	264,205,250	251,922,859
	471,338,309,772	**456,879,857,343**

5. ຕົ້ນທຶນສິນຄ້າທີ່ຂາຍ

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຕົ້ນທຶນສິນຄ້າທີ່ຂາຍ	327,093,370,373	315,215,425,004
ຄ່າຍິນສິ່ງ	25,809,169,226	28,079,920,245
ສ່ວນປ່ຽນແປງສຸດທິຂອງການສຳຮອງເງິນແຮເຄື່ອງໃນສາງ	531,820,405	260,356,524
	353,434,360,004	**343,555,701,773**

6. ລາຍຮັບອື່ນໆ

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍຮັບຈາກການເຊົ່າ	1,776,433,231	1,418,239,618
ລາຍຮັບດອກເບ້ຍ	352,505,517	431,186,000
ລາຍຮັບຈາກການຂາຍຊັບສິນບັດຄົງທີ່	761,677,346	-
	2,890,616,094	**1,849,425,618**

7. ຄ່າໃຊ້ຈ່າຍໃນການຂາຍ

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຄ່າແຮງງານພະນັກງານ ແລະ ຜົນປະໂຫຍດອື່ນໆ	28,048,100,562	21,777,968,507
ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	14,154,552,938	13,447,930,917
ຄ່າເຊົ່າ - ອາຄານ ແລະ ສະຖານທີ່ສະແດງສິນຄ້າ	10,098,468,191	8,763,917,405
ລາຍຈ່າຍຄ່ານ້ຳມັນ	1,957,755,387	2,297,164,311
ລາຍຈ່າຍສິ່ງເສີມການຂາຍ ແລະ ໂຄສະນາ	2,118,661,019	2,872,211,501
	56,377,538,097	**49,159,192,641**

8. ລາຍຈ່າຍບໍລິຫານ

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຄ່າໝຸຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	499,109,787	352,237,993
ຄ່າແຮງງານພະນັກງານ ແລະ ຜົນປະໂຫຍດອື່ນໆ	16,779,129,062	15,222,125,973
ເພີ່ມຂຶ້ນ/(ເກັບຄືນ) ຂອງເງິນແຮສຳລັບໜີ້ສົງໄສຈະເສຍ	180,981,194	(1,219,658,248)
ລາຍຈ່າຍສ້ອມແປງ ແລະ ບຳລຸງຮັກສາ	1,618,062,639	1,456,106,851
ລາຍຈ່າຍສາທາລະນຸປະໂພກ	3,048,652,769	2,337,314,448
ລາຍຈ່າຍເຄື່ອງໃຊ້ຫ້ອງການ	686,259,512	457,588,140
ຄ່າວິຊາຊີບຜູ້ຊ່ຽວຊານ	2,048,188,123	1,919,967,921
ລາຍຈ່າຍບໍລິຫານອື່ນໆ	1,006,561,490	711,233,227
ຄ່າກວດສອບ	295,892,876	277,245,384
ລາຍຈ່າຍປະກັນໄພ	264,832,442	317,808,348
	26,427,669,894	**21,831,970,037**

9. ຕົ້ນທຶນທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍຈ່າຍດອກເບ້ຍຈາກ:		
ເງິນກູ້ຢືມຈາກສະຖາບັນການເງິນ	3,910,082,562	3,434,138,168
ຮຸ້ນກູ້	515,299,764	573,693,046
ຄ່າທຳນຽມທະນາຄານ	304,171,868	434,214,748
ອື່ນໆ	-	8,374,212
	4,729,554,194	**4,450,420,174**

10. ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ກຳໄລສຸດທິຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	843,418,139	2,192,091,482
ຂາດທຶນສຸດທິຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງ	1,744,785,806	(4,496,778,406)
	2,588,203,945	**(2,304,686,924)**

11. ເງິນສົດ ແລະ ທຽບເທົ່າເງິນສົດ

	30 ມິຖຸນາ 2025 ກີບ	*31 ທັນວາ 2024 ກີບ*
ເງິນສົດໃນຄັງ	615,001,427	684,574,488
ເງິນຝາກທະນາຄານ	36,869,645,898	17,935,456,965
	37,484,647,325	**18,620,031,453**

ເງິນສົດ, ລາຍການທຽບເທົ່າເງິນສົດ ແລະ ເງິນເບີກເງິນບັນຊີ ລວມມີລາຍການດັ່ງລຸ່ມນີ້ ເພື່ອວັດຖຸສິ່ງຂອງການສ້າງໃບລາຍງານກະແສເງິນສົດການປີ:

	30 ມິຖຸນາ 2025 ກີບ	*31 ທັນວາ 2024 ກີບ*
ເງິນສົດໃນຄັງ	615,001,427	684,574,488
ເງິນຝາກທະນາຄານ	36,869,645,898	17,935,456,965
	37,484,647,325	**18,620,031,453**
ເງິນເບີກເກີນບັນຊີ	-	(2,028,965,428)
	37,484,647,325	**16,591,066,025**

12. ເງິນຝາກມີກຳນົດໄລຍະສັ້ນ

	30 ມິຖຸນາ 2025 ກີບ	*31 ທັນວາ 2024 ກີບ*
ເງິນຝາກໄລຍະສັ້ນ	31,917,572,100	31,899,172,500
	31,917,572,100	**31,899,172,500**

ນະວັນທີ 30 ມິຖຸນາ 2025, ເງິນຝາກປະຈຳກັບທະນາຄານພາຍໃນປະເທດປະກອບມີ ສັນຍາຝາກປະຈຳເປັນເງິນໂດລາ ໄລຍະ 3 ເດືອນ ອັດຕາດອກເບ້ຍ 1.35% ຕໍ່ປີ.

13. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງຮັບການຄ້າ	14,710,231,727	13,409,175,790
ຫັກເງິນແຮຈາກໜີ້ສົງໄສຈະເສຍ	*(4,287,959,512)*	*(3,902,186,763)*
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	**10,422,272,215**	**9,506,989,027**

ຍອດເຫຼືອໜີ້ຕ້ອງຮັບທາງການຄ້າໃນວັນທີ 30 ມິຖຸນາ 2025 ມີອາຍຸດັ່ງນີ້:

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ຍັງບໍ່ທັນຮອດກຳນົດ	7,126,222,167	7,950,921,596
ເກີນກຳນົດ		
1 – 3 ເດືອນ	1,358,200,354	1,489,591,946
3 – 6 ເດືອນ	1,937,849,694	66,475,485
6 – 12 ເດືອນ	341,356,119	-
ຫຼາຍກວ່າ 12 ເດືອນ	3,946,603,572	3,902,186,763
ໜີ້ຕ້ອງຮັບທາງການຄ້າ	**14,710,231,906**	**13,409,175,790**
ຫັກ ເງິນແຮຈາກໜີ້ສົງໄສຈະເສຍ	*(4,287,959,691)*	*(3,902,186,763)*
ໜີ້ຕ້ອງຮັບທາງການຄ້າ, ສຸດທິ	**10,422,272,215**	**9,506,989,027**

14. ເຄື່ອງໃນສາງ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ເຄື່ອງໃນສາງ	510,170,609,982	500,736,982,852
ຫັກ:		
ເງິນແຮສຳລັບເຄື່ອງສາງເຄື່ອນໄຫວຊ້າ ແລະ ລ້າສະໄໝ	*(8,626,906,470)*	*(7,801,849,905)*
ມູນຄ່າຂາຍອອກໄດ້ສຸດທິ ("NRV")	*(304,569,150)*	*(173,875,028)*
ເຄື່ອງໃນສາງ, ສຸດທິ	**501,239,134,362**	**492,761,257,919**

15. ຊັບສິນໝຸນວຽນອື່ນໆ

	30 ມິຖຸນາ 2025 *ກີບ*	*31 ທັນວາ 2024* *ກີບ*
ຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	3,556,784,603	5,706,649,338
ສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງ (ກ)	2,520,748,280	1,949,361,577
ຄ່າປະກັນໄພຈ່າຍລ່ວງໜ້າ	274,725,857	56,238,807
ຄ່າເຊົ່າຈ່າຍລ່ວງໜ້າ (ຂ)	29,302,651,510	27,747,965,086
ເງິນກູ້ຢືມໃຫ້ພະນັກງານ	315,765,757	357,309,741
ຊັບສິນໝຸນວຽນອື່ນໆ (ຄ)	3,534,963,947	1,565,079,464
	39,505,639,954	**37,382,604,013**

(ກ) ສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງ ແມ່ນສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງທີ່ຈະມີການສະສາງ ໂດຍການຫັກລົບກັບໃບຮຽກເກັບເງິນເມື່ອບໍລິສັດມີການຊຳລະໃຫ້ກັບຜູ້ສະໜອງເຫຼົ່ານັ້ນ;

(ຂ) ຄ່າເຊົ່າຈ່າຍລ່ວງໜ້າປະກອບມີ (i) ຄ່າເຊົ່າຈ່າຍລ່ວງໜ້າຂອງສາຂາ ຫຼວງພະບາງ, ອຸດົມໄຊ, ສົມສະໜຸກ ແລະ ວັງວຽງ ທີ່ຢູ່ໃນຂັ້ນຕອນການກໍ່ສ້າງ ແລະ (ii) ຄ່າເຊົ່າອາຄານຈ່າຍລ່ວງໜ້າ ຂອງສາຂາ ໂພນຕ້ອງ, ໂຊກໃຫຍ່, ທ່າແຂກ, ສະຫວັນນະເຂດ, ປາກຊັນ, ປາກເຊ ແລະ ຫຼວງພະບາງ;

(ຄ) ຊັບສິນໝຸນວຽນອື່ນໆປະກອບມີ ຄ່າທຳນຽມອະນຸມັດເງິນກູ້, ຄ່າເຊົ່າຈ່າຍລ່ວງໜ້າເດີນຈອດລົດສຳລັບພະນັກງານ, ຄ່າເຊົ່າຈ່າຍລ່ວງໜ້າທີ່ພັກສຳລັບພະນັກງານລະດັບສູງ ແລະ ລາຍຮັບດອກເບ້ຍຄ້າງຮັບ.

16. ທີ່ດິນ, ອາຄານ ແລະ ອຸປະກອນ

16.1 *ຊັບສິນທີ່ກຳລັງດຳເນີນການຊື້ ແລະ ກໍ່ສ້າງ*

	ອາຄານ ແລະ ສິ່ງປຸກສ້າງ	*ເຄື່ອງຈັກ ແລະ ອຸປະກອນ*	*ອຸປະກອນຕົກແຕ່ງ ແລະ ຕິດຕັ້ງ*	*ພາຫະນະ*	*ຄອມພິວເຕີ ຊອບແວ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ						
ນະວັນທີ 1 ມັງກອນ 2025	68,138,682,699	23,263,758	17,654,114,680	20,762,775	608,330,424	86,445,154,337
ຜົດຕ່າງຈາກການແປງຄ່າ	3,471,507,361	1,185,234	899,436,021	1,057,815	30,992,986	4,404,179,417
ຊື້ເຂົ້າເພີ່ມ	13,296,620,669	526,242,686	3,003,650,751	2,863,563,495	2,744,931,038	22,435,008,639
ໂອນໄປເປັນຊັບສິນ	(2,279,578,258)	-	(1,278,077,998)	(2,863,563,495)	(595,107,001)	(7,016,326,752)
ນະວັນທີ 30 ມິຖຸນາ 2025	82,627,232,471	550,691,678	20,279,123,454	21,820,590	2,789,147,447	106,268,015,641

16. ທີ່ດິນ, ອາຄານ ແລະ ອຸປະກອນ (ຕໍ່)

16.2 ຊັບສິນບັດຄົ່ງທີ່ມີຕົວຕົນ

	ອາຄານ ແລະ ສິ່ງປຸກສ້າງ	*ເຄື່ອງຈັກ ແລະ ອຸປະກອນ*	*ອຸປະກອນຕົກແຕ່ງ ແລະ ຕິດຕັ້ງ*	*ພາຫະນະ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ					
ນະວັນທີ 1 ມັງກອນ 2025	530,214,038,532	20,559,284,906	123,327,093,991	37,770,415,528	711,870,832,957
ຊື້ເຂົ້າເພີ່ມ	23,493,700	754,847,062	455,893,824	30,943,502	1,265,178,088
ໂອນຈາກຊັບສິນທີ່ກຳລັງດຳເນີນການຊື້ ແລະ ກໍ່ສ້າງ	2,279,578,258	-	1,278,077,998	2,863,563,496	6,421,219,752
ສະສາງອອກ	-	(39,709,923)	(1,098,598,817)	(1,688,764,063)	(2,827,072,804)
ຜົດຕ່າງຈາກການແປງຄ່າ	27,013,170,953	1,047,447,676	6,283,228,064	1,924,314,668	36,268,161,361
ນະວັນທີ 30 ມິຖຸນາ 2025	559,530,281,442	22,321,869,721	130,245,695,060	40,900,473,131	752,998,319,354
ຄ່າຫຼຸຍຫ້ຽນສະສົມ					
ນະວັນທີ 1 ມັງກອນ 2025	143,889,441,848	16,765,935,326	88,703,253,723	35,779,735,908	285,138,366,805
ຄ່າຫຼຸຍຫ້ຽນພາຍໃນໄລຍະ	8,783,232,629	708,738,907	4,591,209,943	551,237,365	14,634,418,844
ສະສາງອອກໃນປີ	-	(34,104,681)	(1,026,397,641)	(1,688,758,112)	(2,749,260,434)
ຜົດຕ່າງຈາກການແປງຄ່າ	7,621,266,709	877,621,036	4,671,041,362	1,841,122,006	15,011,051,113
ນະວັນທີ 30 ມິຖຸນາ 2025	160,293,941,186	18,318,190,588	96,939,107,387	36,483,337,167	312,034,576,328
ມູນຄ່າສຸດທິຕາມບັນຊີ					
ນະວັນທີ 1 ມັງກອນ 2025	386,324,596,684	3,793,349,580	34,623,840,268	1,990,679,620	426,732,466,152
ນະວັນທີ 30 ມິຖຸນາ 2025	399,236,340,256	4,003,679,133	33,306,587,673	4,417,135,964	440,963,743,026

16. ທີ່ດິນ, ອາຄານ ແລະ ອຸປະກອນ (ຕໍ່)

16.3 *ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

	ສິດນຳໃຊ້ທີ່ດິນ	*ຄອມພິວເຕີ ຊອບແວ*	*ລວມ*
	ກີບ	*ກີບ*	*ກີບ*
ຕົ້ນທຶນ			
ນະວັນທີ 1 ມັງກອນ 2025	698,577,813,801	2,324,972,251	700,902,786,052
ໂອນຈາກຊັບສິນທີ່ກຳລັງ ດຳເນີນການຊື້ ແລະ ກໍ່ສ້າງ	-	595,107,000	595,107,000
ຜົດຕ່າງຈາກການແປງຄ່າ	35,590,911,302	118,451,918	35,709,363,220
ນະວັນທີ 31 ມິຖຸນາ 2025	734,168,725,103	3,038,531,169	737,207,256,272
ຄ່າຫຼຸຍຫ້ຽນສະສົມ			
ນະວັນທີ 1 ມັງກອນ 2025	-	2,324,972,251	2,324,972,251
ຄ່າຫຼຸຍຫ້ຽນພາຍໃນໄລຍະ	-	19,243,881	19,243,881
ຜົດຕ່າງຈາກການແປງຄ່າ	-	119,088,255	119,088,255
ນະວັນທີ 30 ມິຖຸນາ 2025	-	2,463,304,387	2,463,304,387
ມູນຄ່າສຸດທິຕາມບັນຊີ			
ນະວັນທີ 1 ມັງກອນ 2025	698,577,813,801	-	698,577,813,801
ນະວັນທີ 1 ມັງກອນ 2025	734,168,725,103	575,226,782	734,743,951,885

17. ຊັບສິນບໍ່ໝຸນວຽນອື່ນໆ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ຈ່າຍລ່ວງໜ້າຄ່າເຊົ່າອາຄານ	-	14,202,483,420
	-	**14,202,483,420**

18. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງສົ່ງອື່ນໆໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍ ເລກທີ 27.2)*	12,613,407,317	7,894,769,326
ໜີ້ຕ້ອງສົ່ງອື່ນໆໃຫ້ກັບພາກສ່ວນທີ່ສາມ	56,054,788,619	49,613,158,267
ໜີ້ຕ້ອງສົ່ງອື່ນໆ (ກ)	871,663,142	1,068,651,850
	69,539,859,078	**58,576,579,443**

(ກ) ໜີ້ຕ້ອງສົ່ງອື່ນໆ ປະກອບມີໜີ້ຕ້ອງສົ່ງທີ່ເກີດຈາກການສົ່ງຄືນສິນຄ້າ.

19. ການກູ້ຢືມ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ໝຸນວຽນ		
ເງິນກູ້ເບີກເກີນບັນຊີ (ກ, ຂ)	-	2,028,965,427
ເງິນກູ້ຢືມໄລຍະສັ້ນ (ຄ, ງ, ຈ)	48,702,618,595	65,361,696,390
	48,702,618,595	**67,390,661,817**
ເງິນກູ້ຢືມໄລຍະຍາວ - ສ່ວນທີ່ໝຸນວຽນ (ສ, ຊ, ຍ)	30,419,055,837	24,031,020,120
	79,121,674,432	**91,421,681,937**
ບໍ່ໝຸນວຽນ		
ເງິນກູ້ຢືມໄລຍະຍາວ - ສ່ວນທີ່ບໍ່ໝຸນວຽນ (ສ, ຊ, ຍ)	43,721,357,913	35,347,370,505
	122,843,032,345	**126,769,052,442**

ຍອດຄົງເຫຼືອສັນຍາເບີກເງິນເກີນບັນຊີທະນາຄານ ນະວັນທີ 30 ມິຖຸນາ 2025 ປະກອບມີ:

ກ). ສັນຍາເບີກເງິນເກີນບັນຊີຈາກທະນາຄານທຸລະກິດພາຍໃນປະເທດ ວົງເງິນ 2,520,100,000 ບາດ ເຊິ່ງມີອັດຕາດອກເບ້ຍລາຍເດືອນເທົ່າກັບອັດຕາດອກເບ້ຍຂັ້ນພື້ນຖານຂອງປະເທດລາວ 1 ເດືອນ ບວກກັບ 3.874%. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

ຂ). ສັນຍາເບີກເງິນເກີນບັນຊີຈາກທະນາຄານທຸລະກິດພາຍໃນປະເທດ ວົງເງິນ 8,500,000 ບາດ ເຊິ່ງມີອັດຕາດອກເບ້ຍລາຍເດືອນເທົ່າກັບອັດຕາດອກເບ້ຍຂັ້ນພື້ນຖານຂອງປະເທດລາວ 1 ເດືອນ ບວກກັບ 4.695% ອັດຕາສ່ວນເພີ່ມຕໍ່ປີ. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

ຍອດຄົງເຫຼືອສັນຍາເງິນກູ້ໄລຍະສັ້ນ ນະວັນທີ 30 ມິຖຸນາ 2025 ປະກອບມີ:

ຄ). ສັນຍາວົງເງິນກູ້ຈາກທະນາຄານທຸລະກິດພາຍໃນປະເທດ ທີ່ມີວົງເງິນຈຳນວນ 30,000 ລ້ານກີບ ແລະ ມີອັດຕາດອກເບ້ຍຄົງທີ່ຕໍ່ປີເທົ່າກັບ 6.05%, ການກຳນົດການຊຳລະຄືນຕົ້ນທຶນເງິນກູ້ແມ່ນພາຍໃນ 150 ວັນ ແລະ ດອກເບ້ຍແມ່ນຕ້ອງຊຳລະທຸກໆເດືອນ. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

19. ການກູ້ຢືມ (ຕໍ່)

ງ). ສັນຍາວົງເງິນກູ້ຮ່ວມຈາກທະນາຄານທຸລະກິດພາຍໃນປະເທດ ທີ່ມີວົງເງິນຈຳນວນ 94,178 ລ້ານກີບ ດ້ວຍອັດຕາດອກເບ້ຍລະຫວ່າງ 7.31%- 12.32% ຕໍ່ປີ. ສັນຍາດັ່ງກ່າວປະກອບດ້ວຍ ໜັງສືຄ້ຳປະກັນ, (ການປະມູນ, ຊື້ຂາຍ ແລະ ປະຕິບັດ), ໜັງສືຄ້ຳປະກັນ ແລະ ສິນເຊື່ອເພື່ອການນຳເຂົ້າ. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

ຈ). ສັນຍາເງິນກູ້ແບບໝຸນວຽນຈາກທະນາຄານທຸລະກິດຕ່າງປະເທດ ສຳຫຼັບສັນຍາຈຳນວນ 250 ລ້ານບາດ ເຊິ່ງມີອັດຕາດອກເບ້ຍລະຫວ່າງ 4.60%- 4.85% ຕໍ່ປີ, ການເບີກເງິນກູ້ແຕ່ລະຄັ້ງແມ່ນກຳນົດໃຫ້ຊຳລະພາຍໃນ 150 ວັນຫຼັງຈາກວັນທີຖອນເງິນກູ້ ແລະ ດອກເບ້ຍຈະຕ້ອງຊຳລະທຸກໆເດືອນ. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

ຍອດຄົງເຫຼືອສັນຍາເງິນກູ້ໄລຍະຍາວ ນະວັນທີ 30 ມິຖຸນາ 2025 ປະກອບມີ:

ສ). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດທີ່ມີວົງເງິນຈຳນວນ 44 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 5% ຕໍ່ປີ ແລະ ມີກຳນົດສິ້ນສຸດນະວັນທີ 31 ທັນວາ 2028, ຕົ້ນທຶນເງິນກູ້ຈະຕ້ອງຊຳລະເປັນໄຕມາດ ແລະ ດອກເບ້ຍມີກຳນົດຊຳລະທຸກໆ ເດືອນ ເລີ່ມແຕ່ວັນທີ 31 ສິງຫາ 2022. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

ຊ). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດທີ່ມີວົງເງິນຈຳນວນ 145 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 6.05% ຕໍ່ປີ ແລະ ມີກຳນົດສິ້ນສຸດນະວັນທີ 31 ພຶດສະພາ 2027, ຕົ້ນທຶນເງິນກູ້ຈະຕ້ອງຊຳລະເປັນໄຕມາດ ແລະ ດອກເບ້ຍມີກຳນົດຊຳລະທຸກໆ ເດືອນ ເລີ່ມແຕ່ວັນທີ 31 ສິງຫາ 2022. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

ຍ). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດທີ່ມີວົງເງິນຈຳນວນ 25 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 5% ຕໍ່ປີ ແລະ ມີກຳນົດສິ້ນສຸດນະວັນທີ 1 ກໍລະກົດ 2028, ຕົ້ນທຶນເງິນກູ້ຈະຕ້ອງຊຳລະເປັນໄຕມາດເລີ່ມຈາກວັນທີ 31 ມັງກອນ 2024. ຫຼັກຊັບຄ້ຳປະກັນຂອງສັນຍາສະບັບນີ້ແມ່ນທີ່ດິນຂອງຜູ້ຖືຮຸ້ນ.

20. ຮຸ້ນກູ້

ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້ນະວັນທີ 30 ມິຖຸນາ 2025 ມີລາຍລະອຽດດັ່ງນີ້:

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ອອກຈຳໜ່າຍຮຸ້ນກູ້ຜ່ານ ຕະຫຼາດຫຼັກຊັບລາວ	65,422,096,200	66,233,252,250
	65,422,096,200	**66,233,252,250**

ເງິນກູ້ຢືມໄລຍະຍາວຈາກຫຸ້ນກູ້ທີ່ອອກຈຳໜ່າຍຜ່ານຕະຫຼາດຫຼັກຊັບລາວ ເປັນໜີ້ສິນໄລຍະຍາວທີ່ບໍ່ມີຫຼັກຊັບຄ້ຳປະກັນ ເຊິ່ງລາຍລະອຽດສຳຄັນ ແລະ ເງື່ອນໄຂຂອງຮຸ້ນກູ້ນະວັນທີ 30 ມິຖຸນາ 2025 ມີລາຍລະອຽດດັ່ງລຸ່ມນີ້:

ລະຫັດ ISIN	*ຈຳນວນ (ໃບ)*	*ທຽບເທົ່າ ກີບ*	*ອັດຕາດອກເບ້ຍ (% ຕໍ່ປີ)*	*ປີ*	*ໄລຍະເວລາ ການຈ່າຍ ດອກເບ້ຍ*	*ວັນທີຄົບກຳນົດ*
LA80000115D6	3,000,000	65,422,096,200	7.50%	4	6 ເດືອນ	19 ພຶດສະພາ 2027

21. ເງິນມັດຈຳຈາກລູກຄ້າ

ເງິນມັດຈຳຈາກລູກຄ້າແມ່ນສຳລັບຈຸດປະສົງຄ້ຳປະກັນການຊື້ສິນຄ້າ ແລະ ມັກຈະຖືກຊຳລະ ແລະ ສະສາງ ພາຍໃນໄລຍະ ເວລາ 1 – 2 ເດືອນ ເມື່ອລູກຄ້າຕົກລົງໃຫ້ຈັດສົ່ງສິນຄ້າ.

22. ໜີ້ສິນໝຸນວຽນອື່ນໆ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ລາຍຮັບຮັບລ່ວງໜ້າຈາກຄ່າເຊົ່າ	2,788,813,566	1,787,028,765
ລາຍຮັບຈາກການຂາຍທີ່ຍັງບໍ່ທັນສົ່ງສິນຄ້າ ລໍຖ້າສະສາງ	2,783,966,089	4,536,580,140
ໜີ້ສິນຄ້າງຈ່າຍໃນການຈັດກິດຈະກຳທາງການຕະຫຼາດ (ກ)	883,206,896	3,658,805,515
ດອກເບ້ຍຮຸ້ນກູ້ຄ້າງຈ່າຍ	567,390,222	567,033,273
ໜີ້ຕ້ອງສົ່ງອາກອນອື່ນໆ (ຂ)	2,531,739,245	3,088,441,389
ໜີ້ຕ້ອງສົ່ງພະນັກງານອື່ນໆ (ຄ)	3,353,363,144	2,046,684,883
ໜີ້ສິນໝຸນວຽນອື່ນໆ (ງ)	4,527,088,713	4,043,876,973
	17,435,567,875	**19,728,450,938**

ກ). ໜີ້ສິນຄ້າງຈ່າຍໃນການຈັດກິດຈະກຳທາງການຕະຫຼາດ ແມ່ນເງິນອຸດໜຸນທາງການຕະຫຼາດຈາກຜູ້ສະໜອງ.

ຂ). ໜີ້ຕ້ອງສົ່ງອາກອນອື່ນໆ ປະກອບມີໜີ້ຕ້ອງສົ່ງຂອງອາກອນລາຍໄດ້, ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ວິສາຫະ ກິດ.

ຄ). ໜີ້ຕ້ອງສົ່ງພະນັກງານອື່ນໆ ປະກອບມີ ປະກັນສັງຄົມຄ້າງຈ່າຍ, ກອງທຶນເງິນບຳນານ ແລະ ກອງທຶນທີ່ໄດ້ຮັບຈາກ ເງິນເດືອນຂອງພະນັກງານ ແລະ ສະຫວັດດີການອື່ນໆ.

ງ). ໜີ້ສິນໝຸນວຽນອື່ນໆ ປະກອບມີເງິນມັດຈຳລ່ວງໜ້າຈາກຜູ້ສະໜອງສຳລັບເງິນເດືອນພະນັກງານ ທີ່ປຶກສາລາຍສິນຄ້າ, ລາຍຈ່າຍຄ້າງຈ່າຍອື່ນໆ, ລາຍຈ່າຍຄ້າງຈ່າຍຈາກການນຳເຂົ້າສິນຄ້າ ແລະ ລາຍຈ່າຍດອກເບ້ຍກູ້ຍືມຄ້າງຈ່າຍ.

23. ທຶນທີ່ອອກ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ	*ຮຸ້ນສາມັນ (ກີບ)*	*ສ່ວນເພີ່ມມູນຄ່າຮຸ້ນ (ກີບ)*
ນະວັນທີ 1 ມັງກອນ 2024	165,000,000	330,000,000,000	24,735,724,722
ຮຸ້ນທີ່ອອກຈຳໜ່າຍ	-	-	-
ນະວັນທີ 31 ທັນວາ 2024	165,000,000	330,000,000,000	24,735,724,722
ນະວັນທີ 1 ມັງກອນ 2025	165,000,000	330,000,000,000	24,735,724,722
ຮຸ້ນທີ່ອອກຈຳໜ່າຍ	-	-	-
ນະວັນທີ 30 ມິຖຸນາ 2025	165,000,000	330,000,000,000	24,735,724,722

24. ອາກອນກຳໄລ

ພາຍໃຕ້ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ອັດຕາອາກອນກຳໄລປົກກະຕິແມ່ນ 20%. ດັ່ງນັ້ນ, ອັດຕາອາກອນກຳໄລທີ່ໄດ້ນຳໃຊ້ຂອງບໍລິສັດໃນປີ 2025 ແມ່ນ 20%. (ສຳລັບຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2024: 20%)

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ກຳໄລກ່ອນອາກອນພາຍໃນໄລຍະ	**35,848,007,622**	**37,427,311,412**
ດັດແກ້ເພີ່ມ/(ຫຼຸດ) ອາກອນກຳໄລ		
ຄ່າໜ້ຍຫ້ຽນທີ່ຄິດໄລ່ດ້ວຍອັດຕາທີ່ກຳນົດໃນກົດໝາຍ ອາກອນລາຍໄດ້	(4,570,964,356)	(4,418,903,767)
ການກັບລາຍການສຳລັບໜີ້ສິງໄສຈະສຸນ	180,981,194	(1,219,658,248)
ສ່ວນປ່ຽນແປງສຸດທິຂອງການສຳຮອງເງິນແຮເຄື່ອງໃນສາງ	531,820,405	260,356,524
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	(843,418,139)	(2,192,091,482)
ລາຍຈ່າຍບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ	394,535,635	203,987,160
ກຳໄລກ່ອນອາກອນ	**31,540,962,361**	**30,061,001,599**
ລາຍຈ່າຍອາກອນກຳໄລ, ໃນອັດຕາ 20%	6,308,192,579	6,012,200,450
ໜີ້ຕ້ອງສົ່ງອາກອນກຳໄລໃນຕົ້ນໄລຍະ	11,488,554,790	11,583,154,920
ອາກອນກຳໄລທີ່ໄດ້ຈ່າຍໃນໄລຍະ	(11,668,993,189)	-
ຜິດຕ່ຽງຈາກການແປງຄ່າ	201,401,844	707,812,545
ໜີ້ຕ້ອງສົ່ງອາກອນກຳໄລໃນຕອນທ້າຍຂອງໄລຍະ	**6,329,156,024**	**18,303,167,915**

25. ກຳໄລຂັ້ນພື້ນຖານຕໍ່ຮຸ້ນ

ລາຍການຕໍ່ໄປນີ້ສະແດງໃຫ້ເຫັນເຖິງລາຍໄດ້ ແລະ ຂໍ້ມູນຮຸ້ນທີ່ໃຊ້ເປັນພື້ນຖານຂອງການຄິດໄລ່ກຳໄລຕໍ່ຮຸ້ນ:

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ກຳໄລສຸດທິທີ່ແບ່ງປັນໃຫ້ແກ່ຜູ້ຖືຮຸ້ນສາມັນເປັນເງິນກີບ	29,539,815,043	31,415,110,962
ຈຳນວນສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ	165,000,000	165,000,000
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ	**179**	**190**

26. ເງິນປັນຜົນ

ໃນກອງປະຊຸມໃຫຍ່ຜູ້ຖືຮຸ້ນໃນວັນທີ 10 ເມສາ 2025, ຜູ້ຖືຮຸ້ນໄດ້ມີມະຕິຕົກລົງປະກາດຈ່າຍເງິນປັນຜົນຈາກກຳໄລສະສົມທີ່ຍັງບໍ່ໄດ້ຈັດສັນ ພາຍຫຼັງການຫັກຄັງສຳຮອງຕາມກົດໝາຍ ແລະ ການຄັງສຳຮອງອື່ນໆ ແລະ ກຳໄລສຸດທິຈາກວັນທີ 1 ມັງກອນ 2024 ຫາ 31 ທັນວາ 2024 ຈຳນວນ 120 ກີບ ຕໍ່ຮຸ້ນລວມມູນຄ່າທັງໝົດ 19,800 ລ້ານກີບ (2023: 19,800 ລ້ານກີບ). ເງິນປັນຜົນກ່າວໄດ້ຜູ້ຖືກຈ່າຍໃຫ້ຜູ້ຖືຫຸ້ນໃນເດືອນພຶດສະພາ 2025.

27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງພາຍໃນໄລຍະມີດັ່ງນີ້:

ຂາຮຸ້ນ
ທ່ານ ວັດດານາ ສຸຄະບັນດິດ (*)
ທ່ານ ພັນໂນລາ ສຸຄະບັນດິດ (*)
ທ່ານ ກິດສະດາ ສຸຄະບັນດິດ (*)
ທ່ານນາງ ປະພັດສອນ ສຸຄະບັນດິດ (*)
ທ່ານນາງ ວຽງດາລາ ບຸບຜາ (*)
ທ່ານ ອານຸສອນ ອຸ່ນໄຕ (*)
ທ່ານ ບຸນທະວີ ສິມມາໄຊ (*)
ທ່ານ ສຸວັນນີ ສີສົມໃຈ (*)
ທ່ານ ໄຊສັງຄົມ ຊຸ່ມມະນີວົງ(*)
Global House International Limited
ຂາຮຸ້ນທີ່ເປັນບໍລິສັດມະຫາຊົນ ແລະ ບຸກຄົນອື່ນໆ

(*) ຂາຮຸ້ນເຫຼົ່ານີ້ເປັນຕົວແທນໃຫ້ແກ່ ຄອບຄົວສຸຄະບັນດິດ ທີ່ມີອັດຕາສ່ວນການຖືຮຸ້ນທັງໝົດ 50.92%.

27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

27.1 ລາຍຮັບ ແລະ ລາຍຈ່າຍ

ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນລາຄາທີ່ຕົກລົງກັນຕາມສັນຍາທີ່ຄືກັນກັບລາຄາຕະຫຼາດ. ບັນດາລາຍການ ເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ລັກສະນະຂອງທຸລະກຳ*	*ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ*	*ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
SCG international corporation co., ltd	ພາກສ່ວນທີ່ກ່ຽວຂ້ອງ	ສິນຄ້າທີ່ຊື້ຈາກພາກສ່ວນທີ່ກ່ຽວຂ້ອງ	36,980,605,706	41,290,659,536
SCG ceramics public company limited	ພາກສ່ວນທີ່ກ່ຽວຂ້ອງ	ສິນຄ້າທີ່ຊື້ຈາກພາກສ່ວນທີ່ກ່ຽວຂ້ອງ	21,636,227,202	30,503,863,455
		ລາຍຈ່າຍຄ່າເຊົ່າ	10,115,560,704	8,781,406,257
		ລາຍຮັບຂາຍສິນຄ້າໃຫ້		
ຄອບຄົວສຸຄະບັນດິດ	ຜູ້ຖືຮຸ້ນ	ພາກສ່ວນທີ່ກ່ຽວຂ້ອງ	165,029,667	-
SCG Distribution Co., Ltd	ພາກສ່ວນທີ່ກ່ຽວຂ້ອງ	ຄ່າວິຊາຊີບຜູ້ຊ່ຽວຊານ	907,292,133	-

ລາຍຈ່າຍຄ່າເຊົ່າແມ່ນການເຊົ່າທີ່ດິນ ແລະ ອາຄານຈາກຜູ້ຖືຮຸ້ນຫຼັກ ເພື່ອນຳໃຊ້ເຂົ້າໃນການດຳເນີນງານ ເຊິ່ງເປັນລາຄາທີ່ຕົກລົງເຫັນດີກັນທັງສອງຝ່າຍຫຼັງຈາກມີການປະເມີນມູນຄ່າ.

27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

27.2 ຍອດເຫຼືອຄົງຄ້າງທີ່ເກີດຈາກລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຄ່າເຊົ່າຈ່າຍລ່ວງໜ້າ *(ບົດອະທິບາຍເລກທີ 15)*			
ຄອບຄົວສຸຄະບັນດິດ	ຜູ້ຖືຮຸ້ນ	29,302,651,510	34,626,106,186
		29,302,651,510	**34,626,106,186**
ໜີ້ຕ້ອງຮັບການຄ້າ *(ບົດອະທິບາຍເລກທີ 13)*			
ຄອບຄົວສຸຄະບັນດິດ	ຜູ້ຖືຮຸ້ນ	564,211,352	119,438,543
		564,211,352	**119,438,543**
ໜີ້ຕ້ອງສົ່ງການຄ້າ *(ບົດອະທິບາຍເລກທີ 18)*			
SCG ceramics public company limited	ພາກສ່ວນທີ່ກ່ຽວຂ້ອງ	6,331,312,434	3,494,019,165
SCG international corporation co., ltd	ພາກສ່ວນທີ່ກ່ຽວຂ້ອງ	5,732,612,753	4,261,702,486
SCG Distribution Co., Ltd	ພາກສ່ວນທີ່ກ່ຽວຂ້ອງ	152,744,130	139,047,675
SCG International Laos Co., Ltd	ພາກສ່ວນທີ່ກ່ຽວຂ້ອງ	396,738,000	-
		12,613,407,317	**7,894,769,326**

27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

27.2 ຍອດເຫຼືອຄົງຄ້າງທີ່ເກີດຈາກລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການທຸລະກຳທີ່ກ່ຽວຂ້ອງກັບຜູ້ບໍລິຫານມີລາຍລະອຽດດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ເງິນເດືອນ ແລະ ຜົນປະໂຫຍດອື່ນໆ	4,508,050,817	3,797,457,405

28. ພັນທະຜູກພັນ

28.1 ພັນທະຜູກພັນສັນຍາເຊົ່າ

ໃນຖານະຜູ້ເຊົ່າ

ບໍລິສັດມີການເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ຮູບແບບສັນຍາເຊົ່າການດຳເນີນງານທີ່ບໍ່ສາມາດຍົກເລີກໄດ້ຈາກຜູ້ຖືຮຸ້ນ. ອາຍຸສັນຍາເຊົ່າແມ່ນມີໄລຍະເວລາຕັ້ງແຕ່ ສອງ ຫາ ຫ້າປີເຄິ່ງ, ແລະ ສັນຍາເຊົ່າສ່ວນຫຼາຍແມ່ນສາມາດຕໍ່ອາຍຸສັນຍາໄດ້ໃນເວລາສິ້ນສຸດຂອງສັນຍາ, ມູນຄ່າຂອງສັນຍາຈະມີການປະເມີນມູນຄ່າຄືນໃໝ່ອີງຕາມການປະເມີນມູນຄ່າທີ່ດິນແຕ່ລະໄລຍະ.

	ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຕ່ຳກວ່າ 1 ປີ	-	-
ແຕ່ 1 - 5 ປີ	42,835,808,736	41,548,442,288
ລວມ	**42,835,808,736**	**41,548,442,288**

28.2 ໜັງສືສິນເຊື່ອ ແລະ ການຄ້ຳປະກັນ

ນະວັນທີ 30 ມິຖຸນາ 2025, ບໍລິສັດໄດ້ມີໜັງສືສິນເຊື່ອ ແລະ ຄ້ຳປະກັນ ທີ່ອອກໂດຍສະຖາບັນການເງິນໃນນາມບໍລິສັດເພື່ອໃຊ້ເຂົ້າໃນການນຳເຂົ້າສິນຄ້າຈາກຜູ້ສະໜອງທີ່ຢູ່ໃນຕ່າງປະເທດ ໂດຍມີຍອດລວມສັນຍາສຸດທິ 29 ລ້ານບາດ.

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບ (ຕໍ່)
ນະວັນທີ 30 ມິຖຸນາ 2025 ແລະ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດັ່ງກ່າວ

29. ເຫດການພາຍຫຼັງວັນທີຂອງເອກະສານລາຍງານການເງິນກາງປີ

ບໍ່ມີເຫດການໃດທີ່ເກີດຂຶ້ນຫຼັງຈາກວັນທີ 30 ມິຖຸນາ 2025 ທີ່ສິ່ງຜົນໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນກາງປີທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດ.

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

22 ສິງຫາ 2025